

# “ຂອບໃຈທີ່ຫລຽວເບິ່ງ”

ປື້ມເພື່ອນັກຮຽນລາວ

ພາບໂດຍ: ຮັນສ ເກອອກ ເບີເກີ

ເນື້ອໃນໂດຍ: ສິມສະຫນຸກ ມີໄຊ

“ຂອບໃຈທີ່ຫລຽວເບິ່ງ”

ປຶ້ມເພື່ອນັກຮຽນລາວ
ພາບໂດຍ: ຮັນສ ເກອອກ ເບີເກີ
ເນື້ອໃນໂດຍ: ສິມສະຫນຸກ ມີໄຊ



# ຫລວງພະບາງ

ຫລວງພະບາງ ເມືອງແຫ່ງພູຜາ ແລະ ແມ່ນ້ຳລຳເຊ, ດິນແດນແຫ່ງອາລິຍະທຳອັນເກົ່າແກ່ ແລະ ມີເອກະລັກຂອງຕົນເອງ ອັນອຸດົມສົມບູນ. ວັດທະນະທຳທີ່ສືບທອດມາແຕ່ບູຮານນະການ ຍັງສືບຕໍ່ປະຕິບັດມາຈົນເທົ່າທຸກວັນນີ້.

ໂຄງການມີຈຸດປະສົງສະເຫນີຮູບພາບ ແລະ ອະທິບາຍຮີດຄອງປະເພນີ ແລະ ພິທີກຳຕ່າງໆ ຂອງຊາວຫລວງພະບາງ.

ປື້ມຫົວນີ້ ແມ່ນຜົນສຳເລັດຂອງໂຄງການດັ່ງກ່າວ ແນໃສ່ໃຫ້ຊາວຫນຸ່ມຮູ້ຈັກວັດທະນະທຳອັນປະເສີດ ແລະ ຄວາມສວຍງາມພິເສດ ຂອງຕົວເມືອງຫນຶ່ງໃນປະເທດລາວ ໂດຍຜ່ານຮູບພາບຈຳນວນຫນຶ່ງ.

# ຄຳເຫັນຂອງພະນະທ່ານ ບົວບານ ວໍລະຂຸນ
# ລັດຖະມົນຕີ ຊ່ວຍວ່າການ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ

ບໍ່ວ່າ ຊາດໃດຢູ່ໃນໂລກນີ້ ລ້ວນແຕ່ມີວັດທະນະທຳປະເພນີຄວາມເຊື່ອຖື ແລະ ພິທີກຳຕ່າງໆປະຈຳຊາດຂອງຕົນ. ຫລວງພະບາງອັນເປັນເມືອງເກົ່າແກ່ ເມືອງຫນຶ່ງຂອງລາວ ຊຶ່ງເມື່ອກ່ອນນີ້ ເຄີຍເປັນລາຊະທານີ ຂອງອານາຈັກລາວລ້ານຊ້າງ ໃນປັດຈຸບັນໄດ້ຖືກຮັບຮອງເປັນເມືອງມໍລະດົກໂລກ ໂດຍອົງການອຸຍແນດສະໂກ (UNESCO) ນັ້ນ ກໍ່ມີວັດທະນະທຳປະເພນີ, ຄວາມເຊື່ອຖື ແລະ ພິທີກຳຕ່າງໆທີ່ເປັນເອກະລັກຂອງຕົນ.

ປື້ມ “ຂອບໃຈທີ່ທ່ານໄດ້ຫລຽວເບິ່ງ” ສະທ້ອນໃຫ້ເຫັນຮູບພາບຕ່າງໆ ທີ່ເລົ່າເຖິງງານບຸນປະເພນີ ແລະ ພິທີກຳຕ່າງໆທາງສາສະຫນາພຸດ ທີ່ຊາວຫລວງພະບາງຖືເປັນປະເພນີປະຕິບັດສືບທອດກັນຫລາຍເສັ່ນຄົນມາແລ້ວ. ກ່ອນອື່ນ ແມ່ນການແຫ່ຫົວ (ປູ່ເຍີຍ່າເຍີ) ການເອົາພະພຸດທະຮູບລົງທົດສົງ, ການທຳບຸນຕັກບາດ, ການແຫ່ນາງສັງຂານ, ການຕົບພະຊາຍໃນເທສະການກຸດສົງການ (ປີໃຫມ່ຂອງລາວ), ພິທີກຳບັນພະຊາ (ບວດຈົວ), ການອຸປະສົມບົດ (ບວດນາກ), ການເຮັດບຸນພະເຫວດ, ບຸນເຮືອໄຟ, ກິດຈະກຳປົກປັກຮັກສາຫນັງສືຜູກໃບລານ ແລະ ອື່ນໆ... ນອກຈາກນີ້ຍັງສະແດງໃຫ້ເຫັນກິລິຍາມາລະຍາດອັນສຸພາບອ່ອນຫວານ, ຄວາມສວຍງາມຂອງການນຸ່ງຖື ອັນຫລາກຫລາຍສີສັນ ແລະ ສິລະປະສະຖາປັດຕະຍະກຳອັນວິຈິດພິດສະດານ ອັນຫນ້າເບິ່ງຫນ້າຊົມຂອງເມືອງຫລວງພະບາງ.

ປື້ມຫົວນີ້ ເກີດເປັນຫມາກຜົນ ອັນຫນ້າສັນລະເສີນ ຂຶ້ນມາໄດ້ກໍ່ຍ້ອນຄວາມອົດສາພະຍາຍາມ, ການເສຍສະຫລະພະລັງສະຕິປັນຍາ ຂອງນັກວິຈິດຕະກຳຊາວເຢຍລະມັນ ຊື່ ຮັນສ-ເກອອດ ແບກເກີ ແລະ ການໃຫ້ການຊ່ວຍເຫລືອດ້ານການເງິນ ທີ່ບໍ່ຫວັງຜົນຕອບແທນຈາກລັດຖະບານ ສ.ສ.ເຢຍລະມັນ ເປັນປັດໄຈຕົ້ນຕໍ. ສິ່ງສຳຄັນອີກອັນຫນຶ່ງ ທີ່ຕ້ອງໄດ້ເອີ່ຍເຖິງ ໃນການເຮັດໃຫ້ວຽກໃຫຍ່ງານຫນັກທາງປັນຍາ ຄືປື້ມຫົວນີ້ບັນລຸຜົນສຳເລັດໄດ້ເປັນຢ່າງດີນັ້ນ ກໍ່ຍ້ອນການສະຫນັບສະຫນູນ, ການຮ່ວມມື ແລະ ການປະສານງານຢ່າງໃຈຈິດໃຈຈໍ່ ແຕ່ຕົ້ນຕະຫລອດປາຍຂອງສະຖານທູດ ສ.ສ.ເຢຍລະມັນ ປະຈຳ ສ.ປ.ປ.ລາວ ເປັນຕົ້ນແມ່ນ ທ່ານເອກອັກຄະລັດຖະທູດ. ຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍ ແລະ ຄວາມຂອບອົກຂອບໃຈ ອັນຈິງໃຈມາຍັງທ່ານເອກອັກຄະລັດຖະທູດ ອຸນຣິກ ເດຣເຊີນ ຊຶ່ງເປັນຜູ້ປະສານງານ ລະຫວ່າງນັກວິຊາການເຢຍລະມັນ ແລະ ລາວ, ໄດ້ຮ່ວມມືກັນ ແລະ ທັງໄດ້ເຂົ້າຮ່ວມຊ່ວຍເຫລືອໃນດ້ານຄວາມຄິດຄວາມເຫັນ ຈົນສາມາດເຮັດໃຫ້ການຈັດພິມປື້ມທີ່ມີຄວາມຫມາຍສຳຄັນຫົວນີ້ສຳເລັດລົງຢ່າງຈົບງາມ.

ການຊ່ວຍເຫລືອ, ການຮ່ວມມືຈາກໃຈຈິງ ແລະ ໝາກຜົນຂອງການເຮັດວຽກຮ່ວມກັນ, ການຄົ້ນຄ້ວາຮ່ວມກັນ ລະຫວ່າງ ຄົນລາວ-ຄົນເຢຍລະມັນ ໂດຍຜ່ານໂຄງການສ້າງປື້ມຫົວນີ້ ເຖິງວ່າມັນເປັນກິດຈະກຳບໍ່ໃຫຍ່ກໍ່ຕາມ ແຕ່ກໍ່ສະທ້ອນໃຫ້ເຫັນມິດຕະພາບອັນດູດດື່ມ, ການພົວພັນອັນເຕັມໄປດ້ວຍຄວາມມີໄມຕີຈິດມິດຕະພາບອັນດີ ລະຫວ່າງ ລາວ-ເຢຍລະມັນ. ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ຈະຈາລຶກໄວ້ໃນດວງໃຈຕະຫລອດໄປ.

# ຄຳເຫັນຂອງພະນະທ່ານ ອຸນຣິກເດຣເຊີນ
# ເອກອັກຄະລັດຖະທູດ ສ.ສ ເຢຍລະມັນ ປະຈຳ ສ.ປ.ປ.ລາວ

ປຶ້ມຫົວນີ້ ຖືກຈັດພິມຂຶ້ນມາ ເພື່ອເປັນເພື່ອນສົນທະນາທັກທາຍກັບນັກຮຽນໃນປະເທດລາວທຸກໆຄົນ. ປຶ້ມຫົວນີ້ເລົ່າເຖິງງານບຸນ ແລະ ພິທີກຳຕ່າງໆທີ່ເພິ່ນສະເຫລີມສະຫລອງ ແລະ ປະຕິບັດກັນທີ່ເມືອງຫລວງພະບາງທີ່ສວຍງາມ. ນັກວິຈິດຕະກຳຊາວເຢຍລະມັນ ຊື່ຮັນສ-ເກອອດ ເບີເກີ ໄດ້ໃຊ້ເວລາເປັນຫລາຍໆປີ ເພື່ອຕິດຕາມ ແລະ ບັນທຶກເອົາງານເຫລົ່ານີ້ໄວ້.

ໃນການບັນທຶກນັ້ນ ລາວໄດ້ຮ່ວມມືກັບຊາວເມືອງຫລວງພະບາງຢ່າງໃກ້ຊິດ, ໃນຈຳນວນເພື່ອນຮ່ວມງານຂອງລາວນັ້ນ ກໍ່ມີຊາວໜຸ່ມເປັນຈຳນວນຫລວງຫລາຍ. ທ່ານສົມສະໜຸກ ມີໄຊ, ນັກໜັງສືພິມ ແລະ ນັກປະພັນລາວໄດ້ເປັນຜູ້ຂຽນບົດສຳລັບປຶ້ມຫົວນີ້.

ຂ້າພະເຈົ້າ ປິຕິຊົມຊື່ນ ຢ່າງຍິ່ງຕໍ່ຜົນສຳເລັດທີ່ງດງາມຂອງການຮ່ວມມືລາວ-ເຢຍລະມັນ ທາງດ້ານວັດທະນະທຳ. ມັນແມ່ນສ່ວນໜຶ່ງຂອງການພົວພັນທີ່ແໜ້ນແຟ້ນບົນພື້ນຖານເຄົາລົບຊຶ່ງກັນ ແລະ ກັນລະຫວ່າງສອງປະເທດລາວ-ເຢຍລະມັນ ພວກເຮົາຊຶ່ງຜູກພັນດ້ວຍໄມຕີຈິດນຳກັນເປັນເວລາອັນຍາວນານມາແລ້ວ.

ຮູບພາບທີ່ເຫັນໃນປຶ້ມຫົວນີ້ ກໍ່ເຄີຍໄດ້ຈັດວາງສະແດງມາແລ້ວ ໃນເດືອນພະຈິກ ປີ 1997 ທີ່ວັດສີສະເກດ, ຊຶ່ງແມ່ນ ອະນຸສອນສະຖານທາງດ້ານພຸດທະສາສະໜາທີ່ເກົ່າແກ່ທີ່ສຸດ ໃນນະຄອນຫລວງວຽງຈັນ, ຊຶ່ງກໍ່ມີຜູ້ຄົນເປັນຈຳນວນຫລວງຫລາຍໄດ້ເຂົ້າມາຊົມງານວາງສະແດງນັ້ນ ດ້ວຍຄວາມປະທັບໃຈ. ໃນປີ 1998 ນີ້, ຫລັງຈາກງານບຸນອອກພັນສາປະວໍລະນາ, ຮູບພາບເຫລົ່ານັ້ນກໍ່ຈະໄດ້ຈັດວາງສະແດງຢູ່ທີ່ເມືອງຫລວງພະບາງ. ຢູ່ທີ່ປະເທດເຢຍລະມັນກໍ່ຈະໄດ້ຈັດໃຫ້ມີງານວາງສະແດງຮູບພາບເຫລົ່ານັ້ນທີ່ຫລາຍໆຫໍພິພິດທະພັນເຊັ່ນດຽວກັນ, ເພື່ອຈະໄດ້ສະເໜີກ່ຽວກັບຮີດຄອງປະເພນີ ແລະ ພິທີກຳຕ່າງໆຂອງຊາວເມືອງຫລວງພະບາງຢູ່ທີ່ນັ້ນ.

ຖ້າປັດສະຈາກການຮ່ວມມືທີ່ດີກັບກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ຂອງລາວແລ້ວ, ກໍ່ບໍ່ອາດສາມາດມີຜົນສຳເລັດດັ່ງນີ້ໄດ້. ຂ້າພະເຈົ້າຂໍກ່າວຄຳຂອບໃຈຢ່າງສຸດຊຶ້ງ ມາຍັງທ່ານຮອງລັດຖະມົນຕີ ບົວບານ ວໍລະຂຸນ, ຜູ້ຊຶ່ງໄດ້ຕິດຕາມໂຄງການນີ້ຢ່າງໃກ້ຊິດ ພ້ອມທັງໃຫ້ການສະໜັບສະໜູນ ແລະ ຊ່ວຍເຫລືອຢ່າງຈິງໃຈຕະຫລອດມາ.

ຂ້າພະເຈົ້າ ຂໍອວຍພອນແດ່ນັກຮຽນ ແລະ ຄູອາຈານທັງໝົດ ໃນປະເທດລາວ ຈົ່ງໄດ້ສະໜຸກສະໜານກັບປຶ້ມຫົວນີ້. ຂ້າພະເຈົ້າຫວັງວ່າ, ປຶ້ມນີ້ ຈະເປັນການປະກອບສ່ວນເພີ່ມຮູບແບບສີສັນໃຫ້ແກ່ການຮຽນທີ່ໂຮງຮຽນ, ພ້ອມທັງເປັນການບູລະນະ ແລະ ອະນຸລັກໄວ້ ຊຶ່ງຮີດຄອງປະເພນີ ແລະ ພິທີກຳຕ່າງໆຂອງຊາວເມືອງຫລວງພະບາງ, ຊຶ່ງມັນບໍ່ພຽງແຕ່ເປັນມໍລະດົກທາງດ້ານວັດທະນະທຳ ທີ່ຍິ່ງໃຫຍ່ຂອງປະເທດລາວເທົ່ານັ້ນ, ຫາກຍັງເປັນມໍລະດົກອັນລ້ຳຄ່າ ຂອງມະນຸດຊາດທັງມວນອີກດ້ວຍ.

# ຄຳເຫັນຂອງພະນະທ່ານ ຄຼີກສະຕຽນ ແບກເກີ
# ເອກອັກຄະລັດຖະທູດ ສ.ສ. ເຢຍລະມັນ ປະຈຳ ສ. ປ. ປ. ລາວ

ຂ້າພະເຈົ້າ ມີຄວາມ ປິຕິ ຊົມຊື່ນ ຢ່າງຍິ່ງ ທີ່ ສາມາດ ສະເໜີ ພວກທ່ານ ດ້ວຍ ຄຳນຳ ໃນ ການພິມຈຳໜ່າຍ ຄັ້ງທີ່ 2 ຂອງ ປຶ້ມ ກ່ຽວກັບ ຮີດຄອງ ປະເພນີ ວັດທະນະທຳ ຂອງ ລາວ ນີ້.

ປຶ້ມ ຫົວນີ້ ແມ່ນ ຜົນສຳເລັດ ຂອງ ການ ຮ່ວມມື ທີ່ດີ ລະຫວ່າງ ກະຊວງການ ຕ່າງປະເທດ ເຢັຍລະມັນ ແລະ ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ ລາວ.

ເປັນ ຄັ້ງທຳອິດ ທີ່ ໄດ້ມີ ປຶ້ມ ຊຶ່ງ ສະເໜີ ກ່ຽວກັບ ຮີດຄອງ ປະເພນີ ວັດທະນະທຳ ຂອງ ປະເທດ ພວກທ່ານ ສຳລັບ ຄູ ອາຈານ ແລະ ນ້ອງ ນັກຮຽນ. ປຶ້ມ ຫົວ ດັ່ງກ່າວ ທີ່ໄດ້ ພິມຈຳໜ່າຍ ໃນ ຄັ້ງ ທຳອິດ ນັ້ນ, ເພິ່ນ ໄດ້ ແຈກຢາຍ ໃຫ້ ແຂວງ ຫຼວງພະບາງ, ຈຳປາສັກ ແລະ ວຽງຈັນ. ເນື່ອງດ້ວຍວ່າ, ປຶ້ມ ຫົວ ດັ່ງກ່າວ ໄດ້ ສ້າງ ຄວາມ ປິຕິ ຊົມຊື່ນ ຢ່າງຍິ່ງ ໃຫ້ແດ່ ຄູ ອາຈານ ແລະ ນ້ອງ ນັກຮຽນ ເຫຼົ່ານັ້ນ, ທາງ ກະຊວງການ ຕ່າງປະເທດ ຂອງ ປະເທດ ເຢັຍລະມັນ ຈຶ່ງ ຕົກລົງ ອະນຸມັດ ເງິນ ເພື່ອ ຈັດ ພິມຈຳໜ່າຍ ປຶ້ມຫົວ ດັ່ງກ່າວ ເປັນຄັ້ງ ທີ່ ສອງ. ໂດຍສະເພາະ ໃນ ເວລາ ທີ່ ຄັງເງິນ ທາງ ລັດຖະການ ເປົ່າຫວ່າງ- ແຫ້ງ ຢູ່ ນັ້ນ, ການໃຫ້ ອະນຸມັດ ດັ່ງກ່າວ, ຊຶ່ງ ສະແດງເຖິງ ນ້ຳໃຈ ແບບ ພິເສດ. ຍິ່ງໄປ ກວ່ານັ້ນ, ປະເທດ ເຢັຍລະມັນ ຍັງໄດ້ ໃຫ້ການ ສະໜັບສະໜູນ ແດ່ ໂຄງການ ປົກປັກ ຮັກສາ ໜັງສື ໃບລານ ລາວ. ທັງໝົດ ເຫຼົ່ານັ້ນ ໄດ້ ສະແດງ ໃຫ້ ເຫັນວ່າ, ໃຫ້ ຄວາມສຳຄັນ ກັບ ການ ປົກປັກ ຮັກສາ ມູນມໍລະດົກ ທາງ ວັດທະນະທຳ ອັນ ຍິ່ງໃຫຍ່ ຂອງ ລາວ.

ປຶ້ມ ທີ່ ຈັດພິມ ໃນ ການ ພິມຈຳໜ່າຍ ຄັ້ງ ທີ່ ສອງ ນີ້ ເປັນ ຈຳນວນ 21.000 ເຫຼັ້ມ ນັ້ນ, ຈະໄດ້ ແຈກຢາຍ ໄປຍັງ ເຂດ ຊົນນະບົດ ຫ່າງໄກ ສອກຫຼີກ ທີ່ ປະເທດ ຂອງ ພວກທ່ານ, ຊຶ່ງ ຍັງ ບໍ່ທັນ ໄດ້ຮັບ ປຶ້ມຫົວ ດັ່ງກ່າວ ນັ້ນ ເທື່ອ. ຂ້າພະເຈົ້າ ຍິນດີ ຢ່າງຍິ່ງ, ທີ່ ທາງ ຫໍສະມຸດ ແຫ່ງຊາດ ໄດ້ ຮັບອາສາ ຈະ ແຈກຢາຍ ປຶ້ມ ເຫຼົ່ານັ້ນ ໄປຍັງ ໂຮງຮຽນ 8.000 ແຫ່ງ ທີ່ ເຂດ ຫ່າງໄກ ສອກຫຼີກ ໃນ ແຂວງ ຕ່າງໆ.

ຂ້າພະເຈົ້າ ຂໍຖື ໂອກາດ ນີ້ ກ່າວ ຄຳຂອບໃຈ ມາຍັງ ທຸກ ພາກສ່ວນ ທີ່ ກ່ຽວຂ້ອງ ທີ່ໄດ້ ແລະ ຍັງຈະ ປະກອບສ່ວນ ເຂົ້າໃນ ພາລາກິດ ຊຶ່ງ ມີ ຄວາມ ສຳຄັນ ຢ່າງຍິ່ງ ສຳລັບ ອາດີດ ແລະ ອານາຄົດ ນີ້ະ ໂດຍສະເພາະ ຊ່າງພາບ ທ່ານ ຮັນສ-ເກອອດ ແບກເກີ, ທ່ານ ສົມສະໜຸກ ມີໄຊ, ນັກປະພັນ ລາວ ຜູ້ ຂຽນ ບົດ ສຳລັບ ປຶ້ມ ຫົວນີ້, ທ່ານ ນາງ ກົງເດືອນ ເນດຕະວົງ, ຫົວໜ້າ ອຳນວຍການ ຫໍສະມຸດ ແຫ່ງຊາດ, ທ່ານ ນາງ ດາລາ ກັນລະຍາ ແລະ ພະນັກງານ ຮ່ວມງານ ປະຈຳ ໂຄງການ ປົກປັກ ຮັກສາ ໜັງສື ໃບລານ ລາວ, ພິເສດ ກໍ່ແມ່ນ ເພື່ອນຮ່ວມງານ ຂອງ ຂ້າພະເຈົ້າ ຈາກ ກະຊວງການ ຕ່າງປະເທດ ເຢັຍລະມັນ, ໂດຍສະເພາະ ອາວ ໂວນຟກັງ ແລເກີ, ຊຶ່ງເປັນ ເພື່ອນ ຂອງ ຂ້າພະເຈົ້າ ເອງ, ດ້ວຍການ ອະນຸມັດ ຈາກ ຜູ້ກ່ຽວ ຊຶ່ງ ນຳໄປສູ່ ການ ຈັດພິມ ຈຳໜ່າຍ ຄັ້ງທີ່ ສອງນີ້.

ວຽງຈັນ, ເດືອນ ສິງຫາ 2000

# ບັນພະບູລຸດຂອງຊາດ



# ປູ່ເຍີ ຍ່າເຍີ

ນານມາແລ້ວ, ມີເມືອງຫນຶ່ງ ຊື່ວ່າ ເມືອງແຖນ ໄດ້ເກີດມີ ເຄືອເຂົາກາດຍັກເຄືອຫນຶ່ງຢູ່ທີ່ຫນອງຕູ້. ເຄືອເຂົາກາດສູງຂຶ້ນ ໄປຮອດເມືອງສະຫວັນຊັ້ນຟ້າ ເຮັດໃຫ້ແສງສະຫວ່າງຂອງດວງຕາເວັນບໍ່ສາມາດສາດສ່ອງໃຫ້ຄວາມອົບອຸ່ນແກ່ພື້ນແຜ່ນດິນໄດ້ ຜູ້ຄົນດຳລົງຊີວິດດ້ວຍຄວາມມືດມົວ ແລະ ຫນາວເຢັນ.

ວັນຫນຶ່ງ ພະຍາຂຸນບູລົມ ໄດ້ຮຽກເສນາອາມາດມາປະຊຸມເພື່ອປຶກສາຫາລືວ່າ: ເຮັດວິທີໃດຈຶ່ງຈະປ່ຳເຄືອເຂົາກາດນີ້ໄດ້? ແຕ່ກໍ່ບໍ່ມີໃຜຂານອາສາໄປຕັດ.

ຕໍ່ມາບໍ່ດົນ ກໍມີຄົນເຖົ້າສອງຜົວເມຍໄດ້ມາກາບທູນພະຍາວ່າ: ພວກຂ້າພະເຈົ້າຊື່ປູ່ເຍີ ຍ່າເຍີ ມີຄວາມຍິນດີຂໍຂານອາສາຕັດເຄືອເຂົາກາດນັ້ນ.

ພະຍາ ສະແດງຄວາມຊົມເຊີຍສອງຜູ້ເຖົ້າທີ່ໄດ້ຍິນຍອມເສຍສະຫລະສູງສົ່ງເພື່ອປະເທດຊາດ.

ກ່ອນຈະອອກເດີນທາງ ພວກເຂົາເຈົ້າໄດ້ຮ້ອງຂໍຢ່າງຫນຶ່ງວ່າ ຖ້າພວກຕົນຫາກຕາຍໄປຂໍໃຫ້ປະຊາຊົນທຸກຄົນ ຢ່າລືມຊື່ຂອງພວກຕົນດ້ວຍ. ພະຍາກໍ່ຮັບປາກ.

ຈາກນັ້ນ ທັງສອງກໍມຸ່ງຫນ້າໄປທີ່ຫນອງຕູ້ທັນທີ ພ້ອມດ້ວຍຂວານຂະຫນາດໃຫຍ່. ພວກເຂົາເຈົ້າໃຊ້ເວລາປ່ຳທັງກາງເວັນ ແລະ ກາງຄືນເປັນເວລາ 3 ເດືອນກັບ 3 ວັນ ຈຶ່ງສາມາດປ່ຳເຄືອເຂົາກາດຍັກນັ້ນລົງໄດ້. ແຕ່ດ້ວຍຄວາມເສົ້າໂສກເສຍດາຍຍິ່ງ: ເຄືອໄດ້ລົ້ມທັບທັງສອງເຖົ້າຕາຍທັນທີ.

ໃນທີ່ສຸດ ແສງສະຫວ່າງ ກໍກັບມາສູ່ພື້ນແຜ່ນດິນອີກຄັ້ງໜຶ່ງ, ນຳເອົາຄວາມອົບອຸ່ນມາສູ່ມວນມະນຸດ, ພືກສາ ແລະ ສັດທັງຫລາຍ. ການດຳລົງຊີວິດເລີ່ມກັບຄືນສູ່ຄວາມເປັນປົກກະຕິອີກຄັ້ງໃຫມ່.

ພະຍາຂຸນບູລົມ ພ້ອມດ້ວຍ ບ່າວໄພ່ລາຊະດອນ ໄດ້ຈັດພິທີສົ່ງສະການ ປູ່ເຍີຍ່າເຍີ ຢ່າງສົມກຽດ.

ນັບຕັ້ງແຕ່ນັ້ນເປັນຕົ້ນມາ ເພື່ອຈາລຶກຄຸນງາມຄວາມດີ ຂອງປູ່ເຍີຍ່າເຍີ ຄົນລາວເຮົາຈຶ່ງມັກຕື່ມຄຳທ້ອຍທ້າຍ“ເຍີໆ” ໃນການປາກເວົ້າຂອງຕົນສະເໝີ. ເຊັ່ນໃນຄຳວ່າ: ໄປເຍີ, ເມືອເຍີ, ມາເຍີ... ທັງໄດ້ເຮັດໂຂນ ຫລືຮູບສັນຍາລັກຂອງທັງສອງໄວ້ ໃຫ້ສັກກະລະນັບຖືສືບຕໍ່ກັນມາເຖິງເທົ່າທຸກວັນນີ້.



ຫ້າມຈຳໜ່າຍ

ທ່ານນີ້ ເປັນຜູ້ຮັກສາຫໍເທວະດາຫລວງ. ປີໜຶ່ງ ສອງເທື່ອ ໃນໂອກາດບຸນປີໃໝ່ ແລະ ບຸນທາດຫລວງ ເພິ່ນຈະເຊີນເອົາໂຂນປູ່ເຍີຍ່າເຍີ ແລະ ສິງແກ້ວສິງຄຳ ອອກຈາກຫີບເພື່ອເຂົ້າຮ່ວມພິທີຕ່າງໆ.



ທຸກໆປີ, ກ່ອນຈະສະຫລອງປີໃຫມ່ ເພິ່ນໄດ້ເອົາໂຂນ ປູ່ເຍີຍ່າເຍືອອກຈາກຫີບທີ່ຮັກສາໄວ້ ຢູ່ຫໍເທວະດາ ຫລວງໃນບໍລິເວນວັດອາຮາມ ເພື່ອໄຫວ້ ແລະ ຖວາຍເຄື່ອງທານ.



ປູ່ເຍີຍ່າເຍີ ຈະເຂົ້າຮ່ວມທຸກໆພິທີທີ່ຈັດຂຶ້ນຕາມຮີດຄອງປະເພນີ, ໃນໄລຍະສະຫຼອງບຸນປີໃຫມ່ ໂດຍສະເພາະໃນການແຫ່ຫວໍ່, ຫົດສົງພະບາງ. ໃນໂອກາດນີ້ ປູ່ເຍີຍ່າເຍີຈະອອກມາຟ້ອນ ເພື່ອຄວາມສົມບູນພູນສຸກຂອງປະຊາຊົນລາວ.



ພິທີແຫ່ປູ່ເຍີຍ່າເຍີ ແລະ ສິງແກ້ວ ສິງຄຳ ໄປຕັກນ້ຳ ທີ່
ແຄມນ້ຳຄານ ເພື່ອເອົາໄປສົງພະບາງ



ນ້ຳທີ່ເອົາມາຈາກນ້ຳຄານ ເພິ່ນຈະບັນຈຸໄວ້ໃນໄຫດິນ
ຊຶ່ງເຍົາວະຊົນຈະແບກໄປ ເພື່ອໄປສົງພະບາງ



ປູ່ເຍີຍ່າເຍີ ຈະລົງໄປຕັກນໍ້າຄານ ເພື່ອສົງພະບາງ
ພ້ອມຂະບວນແຫ່. ໃນພິທີນີ້ ເພິ່ນຈະເອົານໍ້າໃສ່ໄຫ
ດິນໃຫ້ເຍົາວະຊົນແບກ.



ສິງແກ້ວສິງຄຳ ເປັນສິງນ້ອຍໂຕໜຶ່ງທີ່ປູ່ເຍີຍ່າເຍີເອົາມາລ້ຽງ ແລະ ຖືເປັນລູກເພິ່ນເອງ. ນີ້ໝາຍຄວາມວ່າ ມະນຸດພວກເຮົາສາມາດຄຸ້ມຄອງບັນຊາສັດສາວາສິ່ງ ແລະ ທຳມະຊາດ ເພື່ອນຳໃຊ້ໃຫ້ເປັນປະໂຫຍດແກ່ຕົນ.





ເມື່ອແຮ່ທວໍ ຫຼື ນາງສັງຂານໄປເຖິງວັດຊຽງທອງ ຫຼັງຈາກເພິ່ນ
ລ້ຽງປູ່ເຍີຍ່າເຍີແລ້ວ. ເທວະດາຫຼວງທັງສອງ ແລະ ສິງແກ້ວສິງ
ຄຳ ຈະລຸກຂຶ້ນມາຟ້ອນ ທີ່ເດີ່ນວັດຊຽງທອງທ່າມກາງສຽງຄ້ອງ
ສຽງກອງ ເພື່ອຄວາມອຸດົມຮັ່ງມີຂອງປະຊາຊົນລາວ

# ບຸນປີໃໝ່





# ບຸນປີໃຫມ່

ມື້ສັງຂານລ່ວງ ມີການເອົາພະພຸດທະຮູບລົງ ເພື່ອໃຫ້ປະຊາຊົນໄດ້ຫົດສົງ. ເຮືອນໃດທີ່ມີພະກໍເອົາພະລົງຈາກຮ້ານພະເພື່ອຜັດຖູ ແລະ ສົງດ້ວຍນ້ຳຫອມ. ການສົງນ້ຳນີ້ ມີຄວາມຫມາຍເພາະວ່ານ້ຳໃຊ້ເພື່ອລ້າງສິ່ງເປິະເປື້ອນຂອງປີເກົ່າ, ລ້າງສິ່ງທີ່ບໍ່ດີ ແລະ ບົກພ່ອງໃນປີຜ່ານມາ, ຄວາມຊວຍພ້ອມທັງພະຍາດໂລຄາ ໃຫ້ມັນຫາຍໄປພ້ອມກັບປີເກົ່າ ເພື່ອຕ້ອນຮັບປີໃຫມ່ດ້ວຍຄວາມສະອາດບໍລິສຸດ.



24/VII
ຫ້າມຈຳໜ່າຍ

ເຖິງເດືອນຫ້າສັງຂານປີໃໝ່ມາຮອດ ບອກເລົ່າປ່າວເຕືອນຊາວບ້ານ ໃຫ້ໄປເຕົ້າໂຮມຢູ່ວັດ ເພື່ອເອົາພະພຸດທະຮູບລົງມາລ້າງສ່ວຍທົດສົງ ແລະ ປະດິດສະຖານໄວ້ໃນຫໍສົງ. ເມື່ອພະສົງ ແລະ ຊາວບ້ານມາເຕົ້າໂຮມກັນແລ້ວ ເອົາຂັນດອກໄມ້ທູບທຽນ ນ້ຳອົບນ້ຳຫອມ ຕັ້ງໄວ້ເຊິ່ງໜ້າຂອງແຕ່ລະຄົນ ແລ້ວກ່າວຄຳບູຊາດອກໄມ້ໄຫວ້ພະປ່າວ ສັກເຄເທວະດາອະທິຖານວອນໄຫວ້ ຂໍໃຫ້ຟ້າຝົນຊຸ່ມລະຫາຕົກຕາມປົກກະຕິ ເພື່ອໃຫ້ບ້ານເມືອງ ຢູ່ເຢັນເປັນສຸກທຸກຖ້ວນໜ້າ ແລ້ວລ້າງສ່ວຍທົດສົງ ດ້ວຍນ້ຳອົບ ນ້ຳຫອມ. ນ້ຳສົງພະພຸດທະຮູບຖືກັນວ່າເປັນນ້ຳສັກສິດ ເອົາໄປທົດບ້ານເຮືອນ ລູກ ຫລານ ງົວ ຄວາຍ ເປັນການດີ. ໃນມື້ຕໍ່ໄປ ເວລາບ່າຍ 3-4 ໂມງແລງ ພະສົງສຳມະເນນຕີກອງໂຮມເອົາບ່າວສາວ ເອົານ້ຳອົບນ້ຳຫອມມາສືບຕໍ່ທົດສົງພະພຸດທະຮູບ ຊຶ່ງຢູ່ໃນຫໍສົງ. ສຳເລັດແລ້ວ ເຖົ້າແກ່ບ່າວສາວໄປຕັກເອົານ້ຳຢູ່ຕາມສ້າງຕາມທ່າ ມານິມົນພະສົງສາມະເນນ ອາບສົງ. ພະສົງອານຸໂມທະນາໃຫ້ພອນ. ຕໍ່ຈາກນັ້ນປະມານຫ້າໂມງແລງ ຕີຄ້ອງຕີກອງເຕົ້າໂຮມຊາວບ້ານຢູ່ທີ່ວັດ ເພື່ອພາກັນໄປເກັບດອກໄມ້ໃນປ່າ ມາບູຊາພະພຸດທະຮູບຮຽກກັນວ່າແຫ່ດອກໄມ້ ຫລືວ່າ ນຳດອກໄມ້. ຕອນກາງຄືນ ມີການສູດປະຣິຕະມຸງຄູນຢູ່ທີ່ວັດແລະຄົບງັນດ້ວຍສຽງຄ້ອງ ສຽງກອງ ໝໍ່ຂັບ ໝໍ່ລຳ ປະມານພໍສົມຄວນແກ່ເວລາແລ້ວ ກໍເລີກລາກັນກັບບ້ານ. ເມື່ອເອົາພະພຸດທະຮູບລົງທົດສົງຄົບກຳນົດແລ້ວ ກ່ອນຈະເອົາພະພຸດທະຮູບ ຂຶ້ນປະດິດສະຖານໄວ້ບ່ອນເກົ່ານັ້ນ ມີການສົມມາຄາລະວະ ຂໍໂທດພະພຸດທະຮູບເສຍກ່ອນຈຶ່ງເອົາຂຶ້ນ ໃນວັນນັ້ນມີການບາສີ ພະພິກຂຸສົງພ້ອມ.



## ພິທີສູດເຮືອນ

ໃນໂອກາດບຸນປີໃຫມ່ ຈະມີການເຮັດບຸນເຮືອນ ແລະ ນິມົນພະສົງສຳມະເນນມາສູດເຮືອນສູດຊານ.

## ພິທີປ່ອຍສັດ

ພິທີນີ້ເປັນປະເພນີຊາວລາວອີກອັນໜຶ່ງ. ເມື່ອເຖິງມື້ເທດສະການປີໃໝ່ລາວ ນອກຈາກຈະບຳເພັນກຸສົນຖວາຍທານຮັກສາສິນແລ້ວ ຍັງມີການເຮັດບຸນປ່ອຍສັດອີກ. ຈະເປັນສັດຊະນິດໃດກໍໄດ້ເຊັ່ນ ປູ ປາ ຫລື ນົກກໍແລ້ວແຕ່.

ບາງຄົນກໍານົດຈໍານວນສັດ ທີ່ຈະປ່ອຍຕາມອາຍຸຂອງຜູ້ທີ່ຕົນອຸທິດສິ່ງໃຫ້. ເຊັ່ນປະສົງຢາກປ່ອຍສັດ ເພື່ອອຸທິດສ່ວນກຸສົນ ໄປໃຫ້ພໍ່ແມ່ ຄູບາອາຈານ ຫລື ຜູ້ມີບຸນຄຸນອື່ນໆ ກໍປ່ອຍໃຫ້ຄົບຈໍານວນອາຍຸຂອງຜູ້ນັ້ນ.

ການປ່ອຍສັດ ຖືກັນວ່າ ເປັນການໄຖ່ເອົາຊີວິດຂອງສັດນັ້ນໄວ້ ຄືຊ່ວຍໃຫ້ສັດນັ້ນມີຊີວິຢູ່ຕໍ່ໄປອີກ. ເມື່ອເຮົາໄດ້ຊ່ວຍເຂົາແລ້ວ ໄດ້ເມດຕາເຂົາແລ້ວ, ເຂົາຍອ່ມຈະຊ່ວຍເຫລືອເຮົາ ແລະ ເມດຕາສົງສານເຮົາເປັນການຕອບແທນຄືນຄືກັນ. ເພາະພະພຸດທະເຈົ້າໄດ້ຕັດສອນໄວ້ວ່າ ເຮັດບຸນແນວໃດກໍຈະໄດ້ຮັບຜົນແນວນັ້ນ. ດ້ວຍເຫດນີ້ ເຖິງຍາມບຸນປີໃໝ່ມາ ຊາວລາວຈຶ່ງພາກັນປ່ອຍສັດ ເປັນການຈະເລີນພົມວິຫານ ອັນຖືກຕອ້ງຕາມຫລັກທຳມະຂອງພະພຸດທະສາສະໜາແທ້. ການເຮັດບຸນປ່ອຍສັດເພື່ອເປັນການຕໍ່ອາຍຸ ແລະ ໃຫ້ຫາຍຈາກການເຈັບໄຂ້ໄດ້ປ່ວຍ. ປະເພນີອັນດີງາມນີ້ ມີຄວາມຫມາຍສຳຄັນຍິ່ງໃນຍຸກສະໃຫມນີ້ ຊຶ່ງການອະນຸລັກປົກປັກຊີວິດທຳມະຊາດ ພວມກາຍເປັນພາລະກິດອັນຍິ່ງໃຫຍ່, ເຕັມໄປດ້ວຍສິ່ງທ້າທາຍ.





# ຕະຫລາດນັດ

ມື້ສັງຂານລ່ວງ ກໍມີງານຕະຫຼາດນັດຢູ່ກາງຖະຫນົນຫລວງຂອງໂຕເມືອງ. ປະຊາຊົນທີ່ມາທ່ຽວຕະຫລາດນັດກໍພາກັນຊື້ສັດໄປໂຜດ ແລະ ຊື້ທຸງໄປປັກໃສ່ທາດຊາຍ.



# ບັນຫາ ພະຍາກະບິນລະພົມ

ແຕ່ປາງກ່ອນບຸດຊາຍເສດຖີຄົນຫນຶ່ງຊື່ທໍາມະບານກຸມມານ ຮຽນຈົບວິຊາໄຕຣເພດ (ຄວາມຮູ້ຂັ້ນສູງ 3 ຢ່າງ: ໂຫລາສາດ, ຄຸລຸສາດ ແລະ ພາສາສາດ) ເປັນນັກປາດ ຜູ້ມີສະຕິປັນຍາສະຫຼາດ ຫຼັກແຫຼມ ເຫນືອກ່ວາເພື່ອນມະນຸດດ້ວຍກັນ, ສາມາດຮູ້ຮອດພາສາສັດຕ່າງໆ ໃນນັ້ນລວມທັງພາສານົກ. ເມື່ອມີຄົນມາຖາມບັນຫາໃດບໍ່ວ່າ ທາງຄະຕິໂລກ ຫລື ຄະຕິທໍາ ເຂົາສາມາດແກ້ໄດ້ຫມົດ. ຄວາມຊໍານິກ່ຽວກັບທໍາມະບານກຸມມານ ມີສະຕິປັນຍາແຫລມຄົມສາມາດແກ້ບັນຫາໄດ້ ຢ່າງບໍ່ຂ້ອງບໍ່ຄາ ນັ້ນໄດ້ດັງກ້ອງໄປຮອດພະພົມຢູ່ຊວງສະຫວັນ. ຕອນນັ້ນມີພະພົມອົງຫນຶ່ງຊື່ງເປັນເຈົ້າແຫ່ງພົມ ແລະ ເທວະດາທັງຫລາຍຊື່ວ່າ ພະຍາກະບິນລະພົມ ຄິດຢາກທົດສອບຄວາມຮູ້ຂອງ ທໍາມະບານກຸມມານລອງເບິ່ງຈຶ່ງໄດ້ເຫາະລົງມາຍັງໂລກມະນຸດ ແລະ ໄດ້ໄປພົບທໍາມະບານກຸມມານ ຢູ່ທໍ່ປະສາດ 7 ຊັ້ນ ເຊິ່ງເຂົາອາໃສຢູ່ຄົນດຽວ.

ພະຍາກະບິນລະພົມໄດ້ຖາມ ທໍາມະບານກຸມມານ 3 ຂໍ້ຄື: ສີລິຂອງຄົນຢູ່ໃສ ໃນຕອນເຊົ້າ, ຕອນສວາຍ ແລະ ຕອນແລງ. ສີລິ ແມ່ນຈຸດສໍາຄັນໃນຮ່າງກາຍ. ພະຍາກະບິນລະພົມ ບໍ່ທັນໃຫ້ທໍາມະບານກຸມານຕອບທັນທີມີແຕ່ພັດວ່າ ອີກເຈັດມື້ຈະລົງມາຟັງຄໍາຕອບໂດຍໄດ້ວາງເງື່ອນໄຂໄວ້ວ່າ ຖ້າຕອບບໍ່ໄດ້ ທໍາມະບານ ຈະຖືກຕັດຄໍ ແລະ ໃນທາງກົງ ກັນຂ້າມຖ້າຕອບໄດ້ ຕົນເອງກໍ່ຈະຍອມໃຫ້ຕັດຄໍເຊັ່ນກັນ.

ດັ່ງນັ້ນຕາມການຕົກລົງນີ້ ໃນເຈັດມື້ຂ້າງຫນ້າ ລະຫວ່າງ ພະຍາກະບິນລະພົມກັບ ທໍາມະບານກຸມານ ຈະຕ້ອງມີຜູ້ຫນຶ່ງຖືກຕັດຄໍ. ຫລັງຈາກພະຍາກະບິນລະພົມກັບໄປແລ້ວ ທໍາມະບານກຸມານ ຕ້ອງໄດ້ໃຊ້ສະຫມອງຢ່າງຫນັກ ເພື່ອຊອກຫາຄໍາຕອບແຕ່ກໍ່ຊອກບໍ່ເຫັນ, ບໍ່ມີຄໍາພີດີກາເຫລັ້ມໃດເລີຍ ທີ່ກ່າວເຖິງຄໍາວ່າ ສີລິ ຂອງຄົນ. ວັນເວລາລ່ວງເລີຍໄປ 6 ມື້ ນັບແຕ່ທໍາມະບານກຸມານ ຕັ້ງຫນ້າຄົ້ນຄ້ວາຫາຄໍາຕອບຈົນບໍ່ມີເວລາພັກຜ່ອນຫລັບນອນ ຫລື ກິນເຂົ້າກິນນໍ້າ ເຮັດໃຫ້ຕົນໂຕເຂົາຈ່ອຍຜອມລ່າເຫລືອງ ເຫລືອແຕ່ຫນັງຫຸ້ມກະດູກ. ເມື່ອຮູ້ໂຕວ່າຈະຕ້ອງຖືກຕັດຄໍແນ່ນອນແລ້ວ ທໍາມະບານກຸມານ ຈຶ່ງຕັດສິນໃຈຄັ້ງສຸດທ້າຍວ່າ: "ເຮົາເປັນຄົນລະດັບນັກປາດມີຊື່ສຽງ ກັງວານກ້ອງໂລກຜູ້ຫນຶ່ງຊິໄປຍອມໃຫ້ຕັດຄໍປະຈານໃຫ້ເສຍຊື່ສຽງເຮັດຫຍັງ, ແທນງສູ້ໄປຕາຍເອງດີກ່ວາ".

ຂະນະນັ້ນ ເປັນເວລາຄໍ່າມືດແລ້ວ ທໍາມະບານກຸມານ ພາຮ່າງກາຍອັນຈ່ອຍຜອມຢ່າງໂຊຊັກໂຊເຊລົງຈາກທໍ່ປະສາດ 7 ຊັ້ນ ມຸ້ງຫນ້າເຂົ້າປ່າ ເມື່ອເຫັນວ່າ ຈະຍ່າງຕໍ່ໄປບໍ່ໄຫວເຂົາຈຶ່ງໂຍບນັ່ງລົງກ້ອງຕົ້ນຕານຕົ້ນຫນຶ່ງ ໂດຍຕັ້ງໃຈວ່າ ຄວາມອິດເມື່ອຍ ແລະ ຄວາມຫິວທີ່ເພີ່ມຂຶ້ນຊັກໃຊ້ນັ້ນ ຈະເຮັດໃຫ້ເຂົາຈົບຊີວິດລົງ ຢູ່ສະຖານທີ່ແຫ່ງນີ້. ແຕ່ສະຫວັນໄດ້ເປັນໃຈ ທໍາມະບານກຸມານ. ຢູ່ເທິງຕົ້ນຕານລໍານັ້ນ ມີແຮ້ງ ສອງຜົວເມຍອາໃສຢູ່. ຕອນເດິກສະຫງັດຄືນນັ້ນ ແຮ້ງສອງຜົວເມຍໄດ້ລົມກັນກ່ຽວກັບແຜນການຈະໄປຫາກິນໃນມື້ອື່ນ ໂດຍເມຍຖາມຜົວວ່າ ມື້ອື່ນຈະໄປຫາກິນທາງໃດ.

ຜົວ: ມື້ອື່ນພວກເຮົາບໍ່ຕ້ອງບິນໄປຫາກິນໄກໃຫ້ເມື່ອຍປີກດອກ. ຖ້າກິນຊີ້ນມະນຸດຢູ່ເມືອງນີ້ລະ.

ເມຍ: ຊິມີຊີ້ນມະນຸດມະນາມາແຕ່ທາງໃດ ໃຫ້ພວກເຮົາກິນບໍ? ຫລື ວ່າຊິເອີກເສືອ ເພື່ອໃຫ້ກາກິນຊັ້ນເບາະ?

ຜົວ: ພະຍາກະບິນລະພົມຊິລົງມາຕັດຄໍ ທໍາມະບານ ກຸມມານ ແລ້ວເຮົາຊິໄດ້ກິນຊີ້ນເຂົາ,

ເມຍ: ໄປຕັດຄໍເຂົາເຮັດຫຍັງ?

ຜົວ: ຕັດລະບໍແນວວ່າ ຕອບບັນຫາເພິ່ນບໍ່ໄດ້.

ເມຍ: ເພິ່ນຖາມແນວໃດ? ຍາກແທ້ຫວະ? ຂັ້ນນັກປາດຄື ທໍາມະບານກຸມມານ ກະຍັງຕອບບໍ່ໄດ້ຊັ້ນຫວະ?!

ຜົວ: ມັນຊິຍາກອີຫຍັງ! ແຕ່ທໍາມະບານກຸມມານບໍ່ໄດ້ຮຽນເຖິງກໍເລີຍຕອບບໍ່ໄດ້. ເພິ່ນຖາມວ່າ ສີລິຂອງ ຄົນຢູ່ໃສໃນຕອນເຊົ້າ, ຕອນສວາຍ ແລະ ຕອນແລງ.

ເມຍ: ຄັນຊັ້ນເຈົ້າຮູ້ບໍ່ວ່າ ທັງສາມເວລາຫັ້ນ ສີລິຂອງຄົນຢູ່ໃສ?

ຜົວ: ເປັນຫຍັງຊິບໍ່ຮູ້ງ່າຍຊິຕາຍ!

ເມຍ: ຄັນຊັ້ນເວົ້າໃຫ້ຂ້ອຍຟັງແນ່ດຸ.

ຜົວ: ເວົ້າບໍ່ໄດ້, ເດິກດື່ນແລ້ວນອນສາ.

ເມຍ: ບໍ່! ຄັນເຈົ້າບໍ່ເວົ້າໃຫ້ຟັງຂ້ອຍຊິກັ້ນໃຈຕາຍປະເຈົ້າ.

ຜົວ: ເວົ້າກາເວົ້າ. ຄືວ່າຕອນເຊົ້າ ສີລິຂອງຄົນ ຢູ່ຫນ້າ. ສະນັ້ນຕື່ນເຊົ້າມາ ເຂົາເຈົ້າຈຶ່ງພາກັນສ່ວຍຫນ້າລ້າງຕາ. ຕອນສວາຍຢູ່ຫນ້າເອິກ, ຄົນທັງຫຼາຍຈຶ່ງມັກ ເອົານໍ້າລູບຫນ້າເອິກຫລື ລ້າງສ່ວຍຕົນໂຕເລົາຄີງ. ຕອນແລງສີລິແມ່ນຢູ່ຕີນ, ເຂົາເຈົ້າຈຶ່ງພາກັນລ້າງຕີນໃຫ້ສະອາດກ່ອນ ຈຶ່ງເຂົ້ານອນ. ດັ່ງໄດ້ກ່າວຕອນຕົ້ນແລ້ວວ່າ ທໍາມະບານກຸມມານ ຮູ້ພາສານົກ. ດັ່ງນັ້ນຄໍາສົນທະນາຂອງແຮ້ງສອງຜົວເມຍຈຶ່ງປຽບເຫມືອນສິ່ງສັກສິດຊ່ວຍໃຫ້ເຂົາລອດພົ້ນ ຈາກຄວາມຕາຍຢ່າງປະຕິຫານ. ເຂົາຟ້າວລຸກຈາກ ກ້ອງຕົ້ນຕານແລ່ນກັບຄືນສູ່ທໍ່ປະສາດ ດ້ວຍຄວາມສຸກໃຈຢ່າງຫາອັນປຽບບໍ່ໄດ້. ເຊົ້າມື້ຕໍ່ມາເຊິ່ງເປັນມື້ຄົບ 7 ເມື່ອໄດ້ຟັງການຕອບບັນຫາທັງສາມຂໍ້ຂອງ ທໍາມະບານກຸມມານຢ່າງຖືກຕ້ອງເຮັດໃຫ້ພະຍາກະບິນລະພົມມີຄວາມ ປະຫລາດໃຈບໍ່ຫນ້ອຍ. ແຕ່ຊິເຮັດແນວໃດໄດ້ ເມື່ອຕົນເອງເປັນຜູ້ເອີຍປາກທ້າ ພະນັນຂັນຕໍ່ຕັດຄໍກ່ອນ ຈຶ່ງຕົກລົງໃຫ້ຕັດ ເພື່ອບໍ່ໃຫ້ເສຍສັດຈະທີ່ຕົນໄດ້ໃຫ້ໄວ້ກັບມະນຸດ ຜູ້ຫນຸ່ມນ້ອຍຄົນນີ້. ແຕ່ຍ້ອນພະຍາກະບິນລະພົມ ມີລິດເດດແກ່ກ້າ ເຫນືອກວ່າເທວະດາ ແລະ ມະນຸດທັງຫລາຍ. ພຽງແຕ່ຫົວຂອງເພິ່ນກໍ່ຈະເຮັດໃຫ້ໂລກມະນຸດ ພິນາດໄປໄດ້. ຖ້າຫາກປ່ອຍໃຫ້ຫົວ ແລະ ເລືອດຂອງພະຍາກະບິນລະພົມຕົກລົງດິນ ມັນຈະກາຍເປັນໄຟມະໄລກັນໃຫມ້ໂລກທັງໂລກ, ຖ້າໂຍນຫົວ ພະຍາກະບິນລະພົມ ຂຶ້ນສູ່ເວຫາ



ກໍ່ຈະໃຫມ້ອາກາດ ເຮັດໃຫ້ມວນມະນຸດ ແລະ ສັດສາວາ ສິ່ງຫມົດອາກາດຫາຍໃຈ. ຖ້າໂຍນລົງນໍ້າກໍ່ຈະເຮັດໃຫ້ແມ່ນໍ້າຄົງຄາ ມະຫາສະມຸດເຫືອດແຫ້ງເກີດໄພແຫ້ງແລ້ງ ຂົ່ມຂູ່ມວນມະນຸດໃນທົ່ວໂລກ. ດັ່ງນັ້ນເພື່ອຊ່ວຍມວນມະນຸດໃຫ້ຫລຸດພົ້ນຈາກໄພພິບັດເຫຼົ່ານັ້ນ ກ່ອນຈະຖືກຕັດຄໍ ພະຍາກະບິນລະພົມຈຶ່ງເອີ້ນ ເອົາທິດາສາວທັງ 7 ນາງມາພົບເປັນການດ່ວນ. (ລູກ ສາວທັງ 7 ນາງແມ່ນແທນໃຫ້ 7 ວັນ ໃນໜຶ່ງອາທິດ) ຄື: ນາງທຸງສະເທວີ (ວັນອາທິດ ຂີ່ຄຸດ), ນາງໂຄລະຄະເທວີ (ວັນຈັນ ຂີ່ເສືອໂຄ່ງ), ນາງຮາກສະເທວີ (ວັນອັງຄານ ຂີ່ຫມູ). ນາງມົນທາເທວີ (ວັນພຸດ ຂີ່ມ້າລໍ). ນາງກິລິນີເທວີ (ວັນພະຫັດ ຂີ່ຊ້າງ). ນາງກິມິທາເທວີ (ວັນສຸກ ຂີ່ຄວາຍ). ແລະ ນາງມະໂຫທອນເທວີ (ວັນເສົາ ຂີ່ນົກຍູງ). ເມື່ອທັງ 7 ນາງມາພ້ອມຫນ້າພ້ອມຕາກັນ ແລ້ວຜູ້ເປັນພໍ່ຈຶ່ງສັ່ງຄວາມວ່າ ຕອນພໍ່ຖືກຕັດຄໍໃຫ້ພວກລູກເອົາພາຖາດຄໍາມາຮອງຮັບບໍ່ໃຫ້ເລືອດ ແລະ ຫົວພໍ່ຕົກລົງດິນ. ຈາກນັ້ນໃຫ້ເອົາໄປໄວ້ຢູ່ໃນຖໍ້າເຂົາສຸເມນໂນລາດ. ເມື່ອເຖິງເດືອນຫ້າຟ້າລ່ວງ ຫລື ກຸດສົງການປີໃດ ຖ້າສັງຂານລ່ວງຖືກວັນໃດໃຫ້ລູກສາວປະຈໍາວັນນັ້ນ (ຫລື ນາງສັງຂານ) ຂີ່ສັດພາຫະນະຂອງຕົນໄປແຫ່ ເອົາຫົວພໍ່ອອກມາຈາກຖໍ້າເພື່ອທັດສົງ, ສ່ວຍລ້າງດ້ວຍນໍ້າອົບນໍ້າຫອມໃຫ້ສະອາດ ແລ້ວຈຶ່ງເອົາໄປໄວ້ບ່ອນເກົ່າ. ຍ້ອນແນວນັ້ນ ເອງ ເມື່ອຮອດຍາມກຸດສົງການປີໃຫມ່ ແຕ່ລະປີ ປະຊາຊົນລາວ ພວກເຮົາ ຈຶ່ງເອົານໍ້າອົບນໍ້າຫອມ ຫລື ນໍ້າດອກໄມ້ໄປທົດສົງພະພຸດທະຮູບ, ທົດສົງພໍ່ແມ່ເຖົ້າແກ່ຄູບາອາຈານ ແລະ ຍາດພີ່ນ້ອງເພື່ອນຝູງ ເພື່ອຄວາມເປັນສິລິມຸງຄຸນສືບຕໍ່ກັນມາຈົນເຖິງປະຈຸບັນ. ລູກສາວຂອງພະຍາກາບິນລະພົມ ເຈັດຄົນ ແມ່ນເຈັດວັນໃນອາທິດ ແຕ່ລະຄົນຂີ່ສັດຂອງຕົນເອງລົງມາ. ແມ່ນຜູ້ສາວທີ່ງາມກ່ວາຫມູ່ ແລະ ເກັ່ງກ່ວາຫມູ່ຂອງເມືອງຫລວງພະບາງ ແລະ ເຂດອ້ອມແອ້ມທີ່ຖືກຄັດເລືອກໃຫ້ຂຶ້ນນັ່ງຢູ່ເທິງລົດ ເວລາມີການແຫ່ວໍ່. ປະຈຸບັນນີ້, ການຄັດເລືອກເອົານາງສັງຂານ ກາຍເປັນເຫດການສໍາຄັນອັນໜຶ່ງ ມັນກິນເວລາ 3 ຄືນ ແລະ ປະຊາຊົນຊາວຫຼວງພະບາງກໍມັກເຂົ້າຮ່ວມ.



ໃນຂະບວນແຫ່ວໍ່ ຈະມີນັກດົນຕີລາວເທີງເຂົ້າຮ່ວມນຳ ເພາະວ່າ ຕາມປະຫວັດສາດແລ້ວ ຊົນເຜົ່ານີ້ແມ່ນປະຊາຊົນພື້ນຖານ ທີ່ດຳລົງຊີວິດໃນເມືອງນີ້ມາແຕ່ເດີກດຳບັນ.



ປະຊາຊົນເອົານ້ຳຫອມມາສົງພະ ໃນຂະບວນແຫ່ຫວໍ່ ພະສົງອາວຸໂສ ເພິ່ນນັ່ງຢູ່ໃນວໍ່. ໃນສະໄຫມກ່ອນເພິ່ນເອົາຄົນຫາມວໍ່ ເຈົ້າອະທິການຂອງຕົນ. ໃນປະຈຸບັນນີ້ ເພິ່ນເອົາວໍ່ຕັ້ງຢູ່ເທິງລົດບັນທຸກ.

## ພິທີແຫ່ພະບາງ



ຜູ້ຊົງຄຸນວຸດທິ ແລະ ພະສົງສຳມະເນນ ກຽມແຫ່ພະບາງ ຈາກຫໍພິພິທະພັນ ໄປສູ່ວັດໃຫມ່ ສຸວັນນະພູມອາລາມ ເພື່ອສະຖິດຢູ່ຫັ້ນເປັນເວລາ 3 ວັນ ເພື່ອໃຫ້ປະຊາຊົນໄດ້ມາໄຫວ້ ແລະ ທົດສົງນ້ຳ.
ຕາມພື້ນພະບາງກ່າວໄວ້ວ່າ: ພະບາງໄດ້ຫລໍ່ຫລອມໃນລັງກາທະວີບ ເມື່ອພະສຳມາສຳພຸດທະເຈົ້າ ໄດ້ສະເດັດດັບຂັນເຂົ້າສູ່ປະລິນິບພານນານໄດ້ 436 ວັດສາ ແມ່ນພະອໍລະຫັນຕາ ອົງດົວີເສດຕົນຫນຶ່ງ ຊຶ່ງມີນາມວ່າ: ພະຈຸລະນາຄະເຖລະເປັນເຄົ້າ ເປັນປະທານໃນການສ້າງເພິ່ນໄດ້ເອົາໂລຫະທາດ ຄຳ, ເງິນ ແລະ ທອງປະສົມກັນ ແລ້ວອັນເຊີນພະສາລິກະທາດ ຂອງພະສຳມາສຳພຸດທະເຈົ້າເຂົ້າມາປະດິດສະຖານຢູ່ໃນອົງ "ພະບາງ" 5 ລູກ.
ເມື່ອພຸດທະສັກກະລາດໄດ້ 1.400 ຕາມຄວາມວິງວອນຢ່າງແຮງກ້າ ຂອງພະເຈົ້າກຸງອິນທະປັດຖະ (ຂະເໝນ) ຊຶ່ງເປັນພະສະຫາຍພະເຈົ້າສຸປິນນະລາດ ແຫ່ງລັງກາທະວີບ ເພິ່ນໄດ້ຊົງມອບ "ພະບາງ" ຖວາຍພະເຈົ້າກຸງອິນທະປັດຖະ ເພື່ອເອົາມາໄວ້ໄຫວ້ນົບ.



ເມື່ອພຸດທະສັກກະລາດໄດ້ 1896 ປີ ຕາມຄວາມວິງວອນຂອງພະເຈົ້າຟ້າງຸ່ມ ອົງເປັນພະລາຊະບຸດເຂີຍ ພະເຈົ້າປະລະມັດຖະເຂມະລາຊາ (ຂະເໝນ) ກໍໄດ້ຊົງມອບພະບາງຖວາຍ ແດ່ພະເຈົ້າຟ້າງຸ່ມພ້ອມດ້ວຍຄະນະສົງ, ຄຳພີດີກາ ກັບທັງຊ່າງປັ້ນ, ຊ່າງຄວັດ, ຊ່າງກໍ່, ຊ່າງຫລໍ່ຫລອມ ແລະ ອື່ນໆເພື່ອມາສະຖາປະນາພະບໍວໍລະພຸດທະສາສະໜາ ໃນບ້ານເມືອງລາວ ໃຫ້ກ້ານກຸ່ມຮຸ່ງເຮືອງເຫລືອງເຫລື້ອມຂຶ້ນໄປ. ພະບາງເປັນປູຊະນີຍະວັດຖຸເກົ່າແກ່ຄູ່ບ້ານຄູ່ເມືອງ ຊຶ່ງສ້າງມາໄດ້ 2075 ປີແລ້ວ. ແຕ່ພະບາງໄດ້ມາປະດິດສະຖານຢູ່ປະເທດລາວ (ປະເທດລ້ານຊ້າງໃນເມື່ອກ່ອນ) ນັບມາເຖິງປະຈຸບັນນີ້ໄດ້ 642 ປີແລ້ວ. ພະບາງເປັນສັນຍາລັກແຫ່ງການນຳເອົາພຸດທະສາສະໜາ ເຂົ້າມາສູ່ປະເທດລາວ. ຕາມການເລົ່າລືສືບຕໍ່ກັນມາ, ນີ້ແມ່ນພະພຸດທະຮູບອົງມີລິດ ແລະ ສັກສິດ ເຂັດຍຳ. ຫາກປະຕິບັດໃຫ້ຖືກຕ້ອງຕາມຫລັກແລ້ວກໍ່ຍ່ອມບັນດານຜົນໃຫ້ເກີດແກ່ຜູ້ຂາບໄຫວ້ບູຊາໄດ້ແທ້ຈິງ. ພະບາງເປັນພະພຸດທະຮູບຢືນ ພະຫັດຖາ (ມື) ທັງສອງເບື້ອງຍົກໄວ້ພຽງພະອຸຣາ (ເອິກ) ປິ່ນຝ່າພະຫັດຖາທັງສອງໄປກ້ຳໜ້າ ເປັນກິລິຍາຫ້າມ. ພະພຸດທະຮູບ ມີກິລິຍາທ່າທາງຢ່າງນີ້ ຕາມຄຳພີບອກວ່າ ແມ່ນພະພຸດທະຮູບປາງຫ້າມຍາດ, ບໍ່ໃຫ້ວິວາດຜິດຖຽງ ແລະ ບໍ່ໃຫ້ລົບລາຂ້າຟັນກັນ. ຕາມພົງສາວະດານລາວກ່າວໄວ້ວ່າ: ໃນປາງກ່ອນເພິ່ນໄດ້ອັນເຊີນພະບາງຈາກເມືອງວຽງຄຳ (ວຽງຈັນ) ຂຶ້ນເມືອເມືອງຊຽງດົງ ຊຽງທອງ (ຫລວງພະບາງ) ຕາມທຳມະດາຄົນສຳລົບຫາມພະບາງ ມາແຕ່ກ່ອນຫາມເທື່ອລະ 8 ຄົນ. ແຕ່ວ່າໃນມື້ນັ້ນຫາມ 8 ຄົນເລີຍບໍ່ຂຶ້ນ. ຈັດໃສ່ 16 ຄົນກໍຍໍບໍ່ຂຶ້ນ. ພວກນັກປາດລາຊະບັນດິດ ຊຶ່ງຊັກເຄເທວະດາແລ້ວສ່ຽງຊີດີກາ ກໍ່ຊາບວ່າ: ພະບາງຢາກສະຖິດຢູ່ເມືອງວຽງຄຳ ໂຜດຊາວເມືອງນີ້ຕໍ່ໄປອີກກ່ອນ. ເພິ່ນຈຶ່ງມອບໝາຍໃຫ້ເຈົ້າເມືອງວຽງຄຳ ເອົາພະພຸດທະຮູບອົງນີ້ ໄວ້ອຸບປະຖາກ ແລະ ສັກກາລະບູຊາ. ພາຍລຸນມາ ເພິ່ນຈຶ່ງອັນເຊີນພະບາງຂຶ້ນເມືອປະດິດສະຖານໄວ້ເມືອງຊຽງດົງ ຊຽງທອງ.

ສະນັ້ນ ຈຶ່ງເປັນບຸນວາສະໜາໂຊກສະຕາອັນດີຂອງຊາດລາວເຮົາ ທີ່ໄດ້ພະບາງມາໄວ້ອຸບປະຖາກໄຫວ້ນົບໂຄລົບບູຊາຕະຫລອດມາດ້ວຍດີ.



## ຕົບພະທາດຊາຍ

ທຸກມື້ນີ້ ຊາວພຸດ ແລະ ພວກທີ່ຍັງນັບຖືຜີ ຍັງຢູ່ນຳກັນຢູ່. ໃນພິທີຕ່າງໆ ຂອງສາສະໜາພຸດກໍຍັງມີບາງຢ່າງທີ່ມີລັກສະນະໄຫວ້ຜີ.
ໃນຮູບພາບໃບນີ້, ເຂົ້າທີ່ເອົາໄປໃສ່ບາດເຫລືອ ເພິ່ນກໍເອົາໄປຖວາຍໃຫ້ຜີ ດັ່ງເຮົາເຫັນຢູ່ເທິງພາເຂົ້ານີ້.

ເປັນປະເພນີຊາວລາວເຮົາອີກອັນໜຶ່ງ ເມື່ອເຖິງເທດສະການປີໃໝ່ລາວ ນອກຈາກການບຳເພັນກຸສົນຖວາຍທານຮັກສາສິນແລ້ວ ຍັງມີການທຳບຸນຕົບພະທາດຊາຍອີກ ດັ່ງມີເລື້ອງໄວ້ວ່າ ສະໄໝໜຶ່ງໃນເດືອນສີ່ ແຮມແປດຄ່ຳ ພະເຈົ້າປັດເສນທິໂກສົນ ສະເດັດ



ອອກຈາກເມືອງ ສາວັດຖີ ມີພະບໍລິມວົງສານຸວົງ ແລະ ຂ້າລາຊະບໍລິວານຕາມສະເດັດໄປ. ພໍສະເດັດຮອດຫາດຊາຍຣິມຝັ່ງແມ່ນ້ຳໃກ້ເມືອງ ພະອົງໄດ້ທອດພະເນດເຫັນເມັດຊາຍຢູ່ຫາດນັ້ນມີສີຂາວຜຸດຜ່ອງບໍລິສຸດຫາສິ່ງປຽບທຽບບໍ່ມີເລີຍ. ພະອົງມີພະໄທເຫລື້ອມໃສອັນແຮງກ້າ ຈິ່ງຊົງພະອຸດສາກວາດເອົາຊາຍມາໂຮມເຂົ້າກັນ ໃຫ້ເປັນກອງແລ້ວເຮັດເປັນຮູບທາດຊາຍ ເອີ້ນຕາມພາສາປາລີວ່າ: ວາລຸກະເຈດີ ແລ້ວອຸທິດເປັນ ພຸດທະບູຊາ ທຳມະບູຊາ ສັງຂະບູຊາ. ໃນກາລະຄັ້ງນັ້ນພະພຸດທະເຈົ້າປະທັບຢູ່ທີ່ບຸບພາລາມ ມະຫາວິຫານ ທີ່ນາງ ວິສ່າຂາ ສະຫລະຊັບ ສ້າງຖວາຍໝົດເງິນໄປ 27 ໂກດ. ພະເຈົ້າ ປັດເສນທິໂກສົນ ເຂົ້າໄປເຝົ້າພະພຸດທະເຈົ້າເຖິງທີ່ປະທັບ ຖວາຍບັງຄົມທູນເຖິງອານິສົງ ແຫ່ງການກໍ່ທາດຊາຍ ວ່າມີອານິສົງທໍ່ໃດ? ພະພຸດທະເຈົ້າຕັດຕອບວ່າ ບຸກຄົນຜູ້ມີສັດທາອັນແຮງກ້າ ກໍ່ພະທາດຊາຍກໍຈະໄດ້ຮັບອານິສົງດັ່ງຕໍ່ໄປນີ້.

1.ຖ້າເກີດເປັນມະນຸດ ຈະເປັນຜູ້ອຸດົມສົມບຸນທຸກຢ່າງ.

2.ຖ້າຕາຍຈາກມະນຸດແລ້ວ ກໍຈະໄດ້ໄປເກີດໃນສະຫວັນ ສະເຫວີຍທິບພະສົມບັດ ມີນາງຟ້າເປັນບໍລິວານ. ການກໍ່ພະທາດຊາຍນີ້ ຈິ່ງເປັນເລື້ອງຂອງຜູ້ມີສັດທາ ມີຄວາມຄິດອັນດີ ແລະ ເຫັນອານິສົງຊຶ່ງຈະມີໃນພາຍຄັ້ງໜ້າ ແລະ ໄດ້ພາກັນເຮັດເປັນປະເພນີມາແລ້ວໃນຄັ້ງອະດີດຕະການ.

## ພິທີບັນພະຊາ





ເຍົາວະຊົນຜູ້ຫນຶ່ງທີ່ມີອາຍຸບໍ່ທັນຮອດ 20 ປີ ສາມາດບວດເປັນສຳມະເນນ ຫລື ຈົວໄດ້.
ພິທີບວດເພິ່ນເອີ້ນວ່າ ບັນພະຊາ. ຜູ້ທີ່ຢາກບວດເປັນເນນ ຕ້ອງໄດ້ກຽມຈິດກຽມໃຈ ເພິ່ນຈະໄດ້ແຖຜົມ ແລະ ຄິ້ວອອກໃຫ້.

24 / VII



ຮອດມື້ບວດມາ, ຜູ້ນັ້ນຈະແກ້ເຄື່ອງນຸ່ງທຳມະດາອອກ ແລ້ວນຸ່ງຊຸດສີຂາວ



ພໍ່, ແມ່ຂອງຜູ້ນັ້ນ ແລະ ສະມາຊິກໃນຄອບຄົວຈັດພິທີສູ່ຂວັນໃຫ້. ເວລານັ້ນ ຜູ້ກ່ຽວກໍລາຊີວິດຄາລະວາດ ແລະ ເພິ່ນກໍຈະອວຍພອນໃຫ້ຜູ້ທີ່ກຳລັງຈະເຂົ້າສູ່ຊີວິດນັກບວດ.



ຜູ້ທີ່ສະໝັກບວດ ຖ່າຍຮູບເປັນເທື່ອສຸດທ້າຍໃນເຮືອນຂອງຕົນ. ພ້ອມດ້ວຍພໍ່ແມ່ ແລະ ພໍ່ເຖົ້າແມ່ເຖົ້າ ກ່ອນຈະໄປວັດບ່ອນທີ່ຕົນເອງຈະເຂົ້າບວດ.



ຄອບຄົວ ແລະ ໝູ່ເພື່ອນຂອງຜູ້ທີ່ຈະບວດເປັນເນນ ນັ້ນ ແຫ່ກັນໄປວັດບ່ອນທີ່ຈະມີພິທີບັນພະຊາ. ຄວາມ ສຳຄັນຂອງຜູ້ບວດເປັນເນນນັ້ນ ມັນເລີ່ມສະແດງ ອອກຢູ່ບ່ອນວ່າ ເພິ່ນເອົາຄັນຮົ່ມມາກັ້ງໃຫ້.



ເວລາຮອດສິມ ຜູ້ສະໝັກບວດເປັນເນນຖວາຍທູບ ທຽນແດ່ພະພຸດ ພະທຳ ພະສົງ.



ພໍ່ຂອງຜູ້ສະໜັກບວດ ກໍເອົາຜ້າສະບົງໃຫ້.



ແມ່ນນັກບວດ ຫລື ຄູບາ ອາຈານ ຢູ່ວັດເປັນຜູ້ນຸ່ງຜ້າ
ສະບົງໃຫ້.



ອ້າຍຈົວໃໝ່ ສະເໜີຂໍອະນຸຍາດເຂົ້າຮ່ວມໃນຊີວິດສົງ.



ເນນຈະຢືນຖ່າຍຮູບຢູ່ຕໍ່ໜ້າສິມ ຄຽງຄູ່ກັບອຸປະຊາອົງ
ໜຶ່ງ ຂອງຕົນ. ພໍ່ຂອງເພິ່ນຢືນຢູ່ລູກຂັ້ນໄດລຸ່ມ ແລະ
ແມ່ນັ່ງລົງ ເພື່ອສະແດງຄວາມເຄົາລົບ ເພາະວ່າ ເພິ່ນ
ບໍ່ແມ່ນຄົນໃນຄອບຄົວແລ້ວ, ເພິ່ນກາຍເປັນສະມາ
ຊິກໃນຄອບຄົວຂອງສົງແລ້ວ.



ແລ້ວໆ ອ້າຍຈົວບວດໃໝ່ກໍຖືກຕ້ອນຮັບເຂົ້າໃນສັງຫາ

# ບຸນພະເຫວດ





## ພະເຫວດສັນດອນ

ພະເຫວດ ຕ້ອງໄດ້ອອກຈາກບ້ານອອກຈາກເມືອງ ເພາະລາດຊະດອນ ຫາວ່າ ເປັນຄົນເຂັດຄົນຂວາງ ໄປບອກພໍ່ພະເຫວດ, ພະຍາສີສົນໄຊ ວ່າພະເຫວດເປັນຄົນເຂັດຄົນຂວາງ, ທານເງິນ ທານຄຳບໍ່ແລ້ວ ຍັງທານຊ້າງເຜືອກງາມືນອີກ. ຂໍໃຫ້ ພະຍາສີສົນໄຊ ຂັບໄລ່ພະ

ເທວດໜີອອກຈາກເມືອງ ບໍ່ຊັ້ນບ້ານເມືອງຈະຫລົ້ມຈົມ, ຊິທຸກຊິຍາກ ຄົນຊິຕາຍໄປໝົດວ່າຊັ້ນ. ພະຍາສີສິນໄຊ ບັງຄັບລູກໜີອອກຈາກເມືອງ. ພະເທວດບໍ່ຂັດຂືນ ແລະ ຕັດສິນໃຈໜີໄປຢູ່ໃນປ່າ.

ຕອນອອກເດີນທາງ ພະອິນໄດ້ນິມິດລົດໃຫ້ຄັນໜຶ່ງ ພ້ອມມ້າສີ່ໂຕ. ແຕ່ພໍມາຮອດກາງທາງພາມຊໍ້າພັດມາຂໍໝົດ. ກ່ອນຈະອອກໄປ ສູ່ປ່າມິງກຸດຄີລີ, ພະເທວດໄດ້ຂໍໃຫ້ນາງມະທີກັບລູກກັນຫາ ແລະ ສີລີຢູ່ທີ່ເມືອງ. ແຕ່ນາງມະທີບໍ່ຍອມ. ພະເທວດໄປໃສກໍ່ຂໍໄປນໍາ ເພາະວ່າບໍ່ມີຜູ້ເຮັດກິນໃຫ້ກິນ, ບໍ່ມີຜູ້ເບິ່ງແຍງ. ທັງໝົດຄອບຄົວກໍໄດ້ອອກໄປຢູ່ມິງກຸດຄີລີ ແລະ ເມື່ອໄປຢູ່ຫັ້ນບໍ່ດົນຂ່າວກໍໄປຮອດຫູພາມ. ພາມຄົນນັ້ນ ເປັນຄົນຂໍທານເກົ່າ. ເມື່ອໄດ້ເງິນຄໍາຫລາຍແລ້ວ ກໍເອົາໄປຝາກໄວ້ນໍາສ່ຽວ ແຕ່ສ່ຽວໄດ້ເອົາໄປຈັບຈ່າຍໝົດ ຈຶ່ງໄດ້ເອົາລູກສາວຊື່ ນາງອາມິຕະຕາໃຊ້ໜີ້ແທນ. ນາງອາມິຕະຕາ ໄດ້ຜົວຂີ້ເທີະຂີ້ຮ້າຍ ແຖມຍັງເປັນຂີ້ກາກຂີ້ທິດ ແຕ່ນາງອາມິຕະຕາບໍ່ລັງກຽດ ແລະ ໃຫ້ການປົວລະບັດເບິ່ງແຍງຜົວຢ່າງດີເລີດ. ເມື່ອຮອດຍາມແລງກໍເອົາດອກໄມ້ມາບູຊາຜົວ ຕາມຮີດຄອງປະເພນີ ເວລານອນກໍກາບຕີນຜົວ. ສະນັ້ນ ພວກພາມທີ່ເປັນຜົວທັງຫລາຍ ຈຶ່ງບໍ່ເປັນສຸກໃຈ ເມື່ອມາເຫັນນາງອາມິຕະຕາ ປະຕິບັດຕໍ່ຜົວລາວດີ. ພໍກັບເມືອເຮືອນ ພວກເຂົາກໍຮ້າຍເມຍເປັນສຽງດຽວ“ເຈົ້າເປັນເມຍບໍ່ດີ. ຂ້ອຍມີເງິນຄໍາໃຫ້ເຈົ້າ ແຕ່ເຈົ້າບໍ່ໄດ້ປົວລະບັດພັດສີຂ້ອຍຄືນາງອາມິຕະຕາປົວລະບັດຜົວຂອງລາວ”. ພວກເມຍພາມທັງຫລາຍຄຽດ ຈຶ່ງພາກັນມາຕີນາງອາມິຕະຕາ ເວລານາງໄປຕັກນໍ້າຢູ່ແຄມຫ້ວຍ.

ນາງອາມິຕະຕາ ມີຄວາມຄຽດຫລາຍ ແລະ ມາເວົ້າໃຫ້ຜົວຟັງ: “ໂອ້ຍນັບຕັ້ງແຕ່ນີ້ຕໍ່ໄປ ຂ້ອຍຈະບໍ່ໄປຕັກນໍ້າ ແລະ ບໍ່ແຕ່ງກິນໃຫ້ເຈົ້າອີກແລ້ວ”. ນາງຍັງໄດ້ບອກຜົວຂອງລາວຕື່ມວ່າ: “ເຈົ້າຕ້ອງໄປຫາຄົນໃຊ້ມາໃຫ້ຂ້ອຍ. ຖ້າເຈົ້າບໍ່ໄດ້ຄົນໃຊ້ມາ ຂ້ອຍຈະໜີໄປຫາພໍ່ຫາແມ່ຂອງຂ້ອຍ”. ດັ່ງນັ້ນ ຢ້ານເມຍປະ ພາມຈຶ່ງຕອບເມຍວ່າ: “ຂ້ອຍຈະໄປຫາໃຫ້. ຂ້ອຍໄດ້ຍິນວ່າ ພະເທວດມີລູກ 2 ຄົນຄື ກັນຫາ ແລະ ສາລີ. ເພິ່ນອາໄສຢູ່ມິງກຸດຄີລີ”. ນາງອາມິຕະຕາວ່າ: “ຄັນຊັ້ນ ເຈົ້າຈົ່ງໄປເອົາ 2 ຄົນນັ້ນມາໃຫ້ຂ້ອຍ”.

ພາມບອກເມຍ ຫ້າງຫາເຂົ້າໃສ່ຖົງໃຫ້ ເພື່ອຈະອອກເດີນທາງໄປຫາພະເທວດໃນມື້ຕໍ່ໄປ. ເມື່ອພາມອອກໄປຮອດກາງທາງກໍ່ພໍ້ໝາຂອງນາຍພານ ທີ່ໄດ້ແລ່ນຫລຸບເຂົ້າໄປໃສ່ເຂົາໃນທັນໃດ. ເຫັນທ່າບໍ່ດີ ພາມກໍ່ແລ່ນປີນຂຶ້ນຕົ້ນໄມ້ດ້ວຍຄວາມຕົກໃຈ.

ແຕ່ວ່າ ພາມເປັນຜູ້ຊ່າງເສກສັນຕົວະລ່າຍ ຈຶ່ງຖະແຫລງແປງຄວາມຕໍ່ນາຍພານວ່າ: “ພະຍາສີສິນໄຊ ແຕ່ງຂ້ອຍມາຕາມຫາພະເທວດ. ເຈົ້າຊິໃຫ້ໝາມາກັດມາຂ້າຂ້ອຍເຮັດຫຍັງ? ຂ້ອຍຈະລົງໄປເລົ່າສູ່ເຈົ້າຟັງ ແຕ່ໃຫ້ເຈົ້າມັດໝາຂອງເຈົ້າໄວ້ສາກ່ອນ”. ນາຍພານພໍໄດ້ຍິນກ່າວເຖິງຊື່ ຂອງພະຍາສີສິນໄຊແລ້ວ ກໍຮີບມັດໝາໄວ້. ພາມລົງມາແລ້ວບອກກ່າວຕໍ່ນາຍພານວ່າ: “ຂ້ອຍມານໍາເອົາພະເທວດເຂົ້າເມືອຢູ່ບ້ານຢູ່ເມືອງຕາມຄໍາສັ່ງຂອງພະຍາ. ດຽວນີ້ ບ້ານເມືອງເສົ້າໝອງ ແລະ ທຸກຍາກຫລາຍ”. ຫລົງເຊື່ອ, ນາຍພານໄດ້ຮີບຟ້າວຊີ້ບອກທາງໄປມິງກຸດຄີລີໃຫ້ແກ່ພາມ. ເມື່ອມາຮອດມິງກຸດຄີລີ ເຂົາກໍ່ບໍ່ຟ້າວເຂົ້າໄປຫາພະເທວດ ເພາະເຫັນນາງມະທີຢູ່ໃນມິງກຸດຄີລີ. ຕື່ນເຊົ້າມາ ນາງມະທີກໍອອກໄປປ່າຫາຂອງກິນປະຈໍາວັນ ພາມກໍ່ເລີຍເຂົ້າໄປຫາພະເທວດ ແລະ ຂໍກັນຫາ ແລະ ສາລີຈາກເພິ່ນ. ເພິ່ນກໍ່ໄດ້ໃຫ້ທານຕາມຄໍາຂໍ.

ພາມໄດ້ໃຊ້ເຊືອກມັດມືທ້າວທັງສອງຈູງໄປໃນຂະນະທີ່ ນາງມະທີພວມກັບຕ່າວມາຫາຜົວ ແລະ ລູກ. ແຕ່ພະອິນໄດ້ແປງກາຍເປັນສັດຮ້າຍໄປຢືນຂວາງທາງໄວ້. ເສືອໂຄ່ງ,ເສືອດາວ ແລະ ລາສະສີ ມາຕັນທາງ ນາງມະທີໄວ້ ເພື່ອບໍ່ໃຫ້ນາງມະທີມາຂັດຂວາງພະເທວດໃຫ້ທານລູກແກ່ພາມ.

ນາງມະທີ ອ້ອນວອນຮ້ອງຂໍສິ່ງສັກສິດໃຫ້ມາຊ່ວຍເປີດທາງ, ແຕ່ສັດຮ້າຍຈະຍອມຫາຍຕົວໄປກໍ່ຕໍ່ເມື່ອພາມເອົາລູກໜີໄປໄກແລ້ວເທົ່ານັ້ນ. ພໍມາຮອດເຮືອນ ນາງມະທີໄດ້ຮ້ອງຫາລູກໂລດ. ແຕ່ກໍ່ບໍ່ເຫັນແມ່ນແຕ່ເງົາ. ຖາມຜົວ ຜົວກໍ່ປະຕິເສດ ວ່າບໍ່ຮູ້. ນາງແລ່ນເຂົ້າປ່າແລ້ວລົງສະນໍ້ານໍາຊອກຫາລູກແຕ່ກໍ່ ບໍ່ເຫັນຮ່ອງຮອຍຫຍັງໝົດ.

ຕໍ່ມານາງມະທີໄດ້ລົ້ມທ່າວສິ້ນສະຕິລົງຕໍ່ໜ້າພະເທວດ. ສ່ວນພາມມະໂນເຖົ້າໄດ້ຫລົງທາງໄປຕົກເຖິງເມືອງພະຍາສີສິນໄຊ. ເຫັນຕ່າງຕາ, ປະຊາຊົນໄດ້ໄປບອກພະຍາວ່າມີພາມເຖົ້າຜິວດໍາຮ່າງໃຫຍ່ ມັດເດັກນ້ອຍສອງຄົນຜູ້ງາມໆຈູງເຂົ້າມາໃນເມືອງ.

ພະຍາສີສິນໄຊ ສະເດືອກຄິດຮອດຫລານທັງສອງ ຈຶ່ງແຕ່ງຄົນໄປນໍາເອົາເຂົ້າມາໃນວັງ. ເຫັນວ່າ ເປັນຫລານຂອງຕົນແທ້, ພະຍາສີສິນໄຊ ໄດ້ຂໍໄຖ່ເອົາຫລານນໍາພາມ. ເພິ່ນມອບເຄື່ອງໄຖ່ແນວລະຮ້ອຍຢ່າງ ຄືຂ້ອຍຂ້າຮ້ອຍ, ງົວຄວາຍຮ້ອຍພ້ອມທໍໂຮງໃຫ້ແກ່ພາມ ທັງໄດ້ສັ່ງຂ້າໝູ ຂ້າຄວາຍເປັນໂຕ ລ້ຽງເກືອຕື່ມ. ພາມກິນຈົນທ້ອງແຕກຕາຍເພາະຄວາມໂລພາ. ປ່າວຊອກຫາພີ່ນ້ອງພາມເພື່ອມາເອົາມໍລະດົກກໍ່ບໍ່ມີໃຜມາສະເໜີໜ້າ.

ສະນັ້ນ ເຄື່ອງຂອງທັງໝົດຈຶ່ງຕົກມາເປັນຂອງພະຍາສີສິນໄຊຄືນຄືເກົ່າ.

ຫລັງຈາກນັ້ນ ພະຍາສີສິນໄຊ ກໍໄດ້ແຕ່ງເສນາອໍາມາດໄປເຊີນພະເທວດສັນດອນເຂົ້າເມືອງຄືນ ໂດຍມີລາຊະດອນຢ່າງຫລວງຫລາຍ ມາແຫ່ດ້ວຍຊ້າງ, ມ້າ ມາຮັບຕ້ອນຢ່າງຄຶດຄື້ນ.



ເຖິງລະດູເດືອນສີ່ມາ ຊາວບ້ານຊາວເມືອງຫ້າງຫາດອກໄມ້ມາໄວ້ສັກກາລະບູຊາ ແລະ ເຮັດບຸນພະເຫວດຕັ້ງແຕ່ນັ້ນເປັນຕົ້ນມາ. ບຸນພະເຫວດ ຫລື ບຸນມະຫາຊາດ ຄືບຸນຟັງເທດສະນາ ເລື່ອງເວດສັນຕະຊາດົກ ຊຶ່ງປະກອບດວ້ຍຄາຖາພັນ ຈັດເປັນກັນໄດ້ 13 ກັນ. ບາງທອ້ງຖິ່ນ ມີ16 ກັນ ເປັນຊາດົກທີ່ໃຫຍ່ ແລະ ຍືດຍາວສຳນວນດີເທດງ່າຍ ຟັງເຂົ້າໃຈ ໄດ້ຄວາມຮູ້ ຄວາມສະຫຼາດ ຟັງແລ້ວ ເກີດສັດທາເຫຼື້ອມໃສໃນພຸດທະສາສະໜາ.

ການທຳບຸນມະຫາຊາດນີ້ຖືກັນເຮັດໃນລະຫວ່າງເດືອນສີ່ ຈະເປັນຂ້າງຂຶ້ນ ຫລື ຂ້າງແຮມກໍ່ໄດ້ ແລ້ວແຕ່ຄວາມສະດວກ.



ຫ້າມຈຳໜ່າຍ

ເພິ່ນເຖົ້າໂຮມຍາດໂຍມ ມາປະຊຸມປຶກສາຫາລື ແບ່ງໜັງສື ອອກເປັນຫລາຍກັນ ຈາກກັນໃຫຍ່ເປັນກັນນ້ອຍໃຊ້ພະເນນພາຍໃນວັດ ຫລື ວັດບ້ານອື່ນມາເທດ. ປຸກຜາມ ຫລື ຕູບ ໄວ້ຕອ້ນຮັບພະເນນ ແລະຍາດໂຍມບ້ານອື່ນ.
ປະດັບຕົບແຕ່ງ ທໍແຈກ ຫລື ໂຮງທຳ ດ້ວຍດອກໄມ້ຂອງຫອມ ພວງມະໄລ, ຊໍ່, ທຸງ ຕ່າງໆ. ຈັດຫາດອກໄມ້ ທຽນພັນ ທູບພັນ ໄວ້ບູຊາຄະຖາພັນ. ຕັ້ງໝໍ້ນ້ຳໄວ້ 4 ດ້ານເທິງທໍແຈກ, ຫາດອກບົວຫລວງບົວນ້ອຍ, ຈອກ, ແໜ ແລະ ດອກກາງຂອງ ມາປະດັບທໍທຳມາດ. ຄັນເຖິງມື້ໂຮມແລ້ວ ທັງພະເນນ ແລະຍາດໂຍມບ້ານອື່ນກໍມາໂຮມ. ພໍເວລາສາມໂມງເຊົ້າຕີກອງໂຮມໄປແຫ່ພະເວດ.



ຄະນະບ້ານ ແຕ່ງຄົນຜູ້ສະຫລາດອາດຮູ້ ທິດ ຫລື ຈານ ໄປນິມົນພະອຸປະຄຸດ ມາປຸກທຳໄວ້ກຳ້ຫລັງຫໍແຈກ ເພື່ອໃຫ້ມາຊ່ວຍປົກປ້ອງຈາກມານຮ້າຍຕ່າງໆ. ໃຫ້ຫາເອົາຄົນຜູ້ທີ່ສົມຄວນເຖົາລົບນັບຖືມາ ແຕ່ງຕົວເປັນພະເຫວດ ແລະ ນາງ ມະທີ ເພື່ອໄປຢູ່ໃນປ່າແຫ່ງໃດແຫ່ງໜຶ່ງ. ແລ້ວຈັດຂະບວນແຫ່ ອອກໄປເຊື້ອເຊີນເຂົ້າມາເມືອງ. ໃນຂະບວນແຫ່ນີ້ ນິມົນພະສົງເທດສຽງດີຂຶ້ນນັ່ງສະແນນຫາມໄປ. ເມື່ອໄປເຖິງແລ້ວ, ທຸກຄົນເອົາຂັນດອກໄມ້ມາໂຮມກັນ ແລ້ວພ້ອມກັນທຳພິທີໄຫວ້ພະຮັບສິນຕາມຮີດຄອງແລ້ວ. ນິມົນພະອົງເທດສຽງດີ ເທດສັກກະຕິບັ້ນ ເຊີນພະເຫວດເຂົ້າໄປສະເຫວີຍເມືອງ. ຈົບແລ້ວ ກໍຫາມສະແນນພະເທດໄປກ່ອນຂະບວນແຫ່ຕາມຫລັງ ເຖິງພະສິມມາ ຫລື ຫໍແຈກວັດ ແລ້ວ ແຫ່ວຽນສາມຮອບ ແລ້ວ ນຳເອົາດອກໄມ້ທູບທຽນໄປວາງໄວ້ໃນທີ່ຈັດໄວ້ ແລ້ວ ລາທະນາພະສົງ ສູດມຸງຄຸນໄຊນ້ອຍ ໄຊໃຫຍ່. ຈົບແລ້ວ ເທດບັ້ນຕົ້ນ ໂພທິສັດ, ອິຕິປິໂສ, ວັດຕະໂສ, ມາໄລຫມື່ນ, ມາໄລແສນ. ຕອນບ່າຍ, ກາງຄືນ ແລະ ຂ້ອນແຈ້ງ ແຫ່ເຂົ້າພັນກ້ອນ ແລ້ວເທດມະຫາເຫວດ ຕະຫລອດໝົດມື້. ຈົບພິທີໃນມື້ນັ້ນ.



ເມື່ອໄດ້ເວລາສອງໂມງແລງ ທາງວັດຈະຕີກອງໂຮມພະສົງສຳມະເນນ ແລະ ອອກຕົນຍາດໂຍມໄປໂຮມກັນທີ່ວັດ ຈັດເອົາ ຄ້ອງ, ກອງ ແລະເຄື່ອງດົນຕີຕ່າງໆທຳມາດ ພ້ອມດ້ວຍພະພຸດທະຮູບ ແຫ່ໄປທີ່ຮາວປ່າແຫ່ງໃດ ແຫ່ງໜຶ່ງ ຊຶ່ງເປັນປ່າທີ່ມີດອກໄມ້ດົກໜາ. ເມື່ອໄປເຖິງແລ້ວ ຕ່າງຄົນຕ່າງເກັບເອົາດອກໄມ້ມາແລ້ວ ຫົວໜ້າພາໄຫວ້ພະ ຮັບສິນ ແລະ ຟັງເທດ.

ການເທດໃນພິທີນີ້ ແມ່ນເທດເຊີນພະເຫວດສັນດອນເຂົ້າເມືອງ ຈົບແລ້ວກໍແຫ່ແຫນ ຕີຄ້ອງ ຕີກອງ ແລະ ດົນຕີຕ່າງໆ ແຫ່ພະພຸດທະຮູບ ແລະ ພະສົງອອກກ່ອນ. ພະຍາບູລົມສີສິນໄຊ, ນາງພຸດສະດີ, ພະເຫວດ, ນາງ ມະທີ, ກັນຫາສາລີ ແລະ ຊາວເມືອງໄປຕາມຫລັງ.

ເມື່ອມາຮອດຫໍແຈກແລ້ວ ກໍ ແຫ່ອ້ອມ ສາມຮອບແລ້ວເອົາດອກໄມ້ໄປບູຊາໄວ້ເທິງທຳມາດ ແລ້ວທຳພິທີບາສີສູ່ຂວັນໃຫ້ ພະຍາບູລົມສີສິນໄຊ, ນາງ ພຸດສະດີ, ພະເຫວດ, ນາງມະທີ ແລະ ກັນຫາສາລີຕໍ່ໄປ.

# ບຸນເຮືອໄຟ





## ສາເຫດແຫ່ງການເຮັດເຮືອໄຟ



ແຕ່ກ່ອນມີຄູ່ຜົວເມຍພະຍາກາເຜືອກ ເຮັດຮັງຢູ່ເທິງຕົ້ນໄມ້ເດື່ອແຄມແມ່ນ້ຳ. ນາງພະຍາກາເຜືອກມີໄຂ່ຫ້າໜ່ວຍ. ມື້ໜຶ່ງມີລົມພະຍຸເກີດຂຶ້ນ ຕົ້ນໄມ້ເດື່ອຖືກລົມພັດຫັກລົງນ້ຳ ພ້ອມກັບໄຂ່ຫ້າໜ່ວຍ ທີ່ໄຫລໄປຕາມນ້ຳ.

ໄຂ່ໜ່ວຍໜຶ່ງໄຫລໄປຕົກຢູ່ທ່ານ້ຳ ຂອງພະຍາ ກຸກຸສັນໂທ(ໄກ່) ພະຍາ ກຸກຸສັນໂທ ກໍເອົາໄປຟັກໄວ້.

ໄຂ່ໜ່ວຍທີ່ສອງໄຫລໄປຕົກຢູ່ທ່ານ້ຳ ຂອງພະຍາໂກນາຄະມະໂນ(ນາກ) ພະຍາໂກນາຄະມະໂນກໍເອົາໄປຟັກໄວ້ຄືກັນ.

ໄຂ່ໜ່ວຍທີ່ສາມໄຫລໄປຕົກຢູ່ທ່ານ້ຳ ຂອງພະຍາກັດສະໂປ(ເຕົ່າ) ພະຍາກັດສະໂປກໍເອົາໄປຟັກໄວ້.

ໄຂ່ໜ່ວຍທີ່ສີ່ໄຫລໄປຕົກຢູ່ທ່ານ້ຳ ຂອງພະຍາໂຄຕະໂມ(ງົວ) ພະຍາໂຄຕະໂມກໍເອົາໄປເບາະໄວ້.

ໄຂ່ໜ່ວຍທີ່ຫ້າໄຫຼໄປຕົກຢູ່ທ່ານ້ຳ ຂອງພະຍາລາຊະສີ(ສິງ) ພະຍາລາຊະສີກໍເອົາໄປເບາະເຊັ່ນກັນ. ໄຂ່ທັງ



ຫ້າໜ່ວຍນັ້ນໄດ້ແຕກອອກມາເປັນມະນຸດ. ພໍໃຫຍ່ຂຶ້ນມາກໍຄຶດຢາກອອກໄປບວດເປັນພະລືສີທຳມະໂພທິສັດ. ເມື່ອອອກໄປບວດແລ້ວ ທຸກຕົນກໍມີໃຈຢາກເຫັນໜ້າບິດາຜູ້ບັງເກີດເກົ້າ ແຕ່ລະຕົນກໍສະແຫວງຫາພໍ່ ພໍໃຜພໍລາວ ບໍ່ຮູ້ວ່າມີຍາດ ສາຍໂລຫິດຮ່ວມອຸທອນດຽວກັນຈັກຄົນແທ້.

ໃນມື້ໜຶ່ງ ບັງເອີນ ທັງຫ້າອົງໄດ້ມາພົບພໍ້ກັນ ແລະ ສົນທະນາປາໄສ ຖາມຂ່າວຄາວຄວາມສຸກທຸກ ບ້ານເກີດເມືອງນອນ ແລະ ບິດາມານດາຊຶ່ງໃຫ້ກຳເນີດ ແກ່ກັນແລະ ກັນ.

ໃນເວລານັ້ນປະກົດວ່າຄວາມຕັ້ງໃຈ ຂອງແຕ່ລະຕົນມັນຊ່າງເປັນອັນໜຶ່ງອັນດຽວກັນດີແທ້. ໝາຍຄວາມວ່າ ອາດມີບິດາມານດາຜູ້ດຽວກັນ.

ໃນທັນໃດກໍເລີຍຮ້ອນຮອດບິດາທັງມານດາ ທີ່ເນົາຢູ່ເທິງດາວະດຶງຟ້າ. ສອງອົງກໍຢູ່ບໍ່ໄດ້ ເລີຍສະເດັດດ່ວນລົງມາເຖິງ ແລ້ວກ່າວຂຶ້ນວ່າ ບິດາຂອງພວກເຈົ້າກໍຄື ພວກເຮົາພະຍາກາເຜືອກນີ້ແລ້ວ.

ເມື່ອຮູ້ວ່າແມ່ນບິດາມານດາຂອງຕົນແລ້ວ ກໍສະແດງຄວາມເຄົາລົບຄາລະວະ ຕໍ່ອົງບິດາມານດາຂອງຕົນ. ພະຍາກາເຜືອກກໍເລົ່າເຫດການເບື້ອງຫລັງສູ່ລູກຟັງ ແລ້ວກໍກັບຂຶ້ນເມືອຢູ່ຊັ້ນດາວະດຶງ.

ກ່ອນຈະກັບ, ລູກຊາຍທັງຫ້າກໍໄດ້ຮ້ອງຂໍພະຍາກາເຜືອກຢຽບຫີນສີລາໃຫ້ເປັນຮອຍຕີນປະໄວ້ໃຫ້ໄດ້ນົບໄຫວ້ເຄົາລົບບູຊາໃນເວລາຄິດເຖິງ.

ຕອນນີ້ ພະຍາກາເຜືອກກໍສັ່ງລູກທັງຫ້າໄວ້ວ່າ ເມື່ອເຖິງເດືອນ 11 ເພັງຂອງທຸກໆປີ ໃຫ້ພວກລູກຟັ່ນຝ້າຍເຮັດເປັນຮູບຕີນກາ ເອົາວາງໃສ່ຖ້ວຍ ຫລື ຈານແບນ ແລ້ວເອົານ້ຳມັນຖອກລົງໃສ່ແລ້ວໆ ໃຫ້ພວກລູກເອົາໄມ້ປ່ອງມາເຮັດເປັນຮູບເຮືອ ເອົາຖ້ວຍນ້ຳມັນຢາຍໃສ່ຕາມເຮືອໃຫ້ເປັນຫວ່າງສະເໝີກັນ ແລ້ວໄຕ້ບູຊາ ແລະປ່ອຍໃຫ້ໄຫລໄປຕາມລຳແມ່ນ້ຳເນີ ລູກເອີຍ !

ພໍເວົ້າສຸດຄວາມແລ້ວກໍຫາຍຕົວໄປ.ສ່ວນລູກທັງຫ້າກໍຖືເອົານາມຂອງແມ່ລ້ຽງມາເປັນຊື່ຕົນ ແຕ່ນັ້ນມາ ພວກເຮົາຈຶ່ງເອີ້ນວ່າ ພະເຈົ້າທັງຫ້າພະອົງຄື ກຸກຸສັນໂທ,ໂກນາຄະມະໂນ, ກັດສະໂປ, ໂຄຕະໂມ ແລະ ລາຊະສີເທົ່າທຸກວັນນີ້.

ດ້ວຍເຫດນີ້ ລາວເຮົາຈຶ່ງໄດ້ເຮັດເຮືອໄຟເປັນປະເພນີໃນເວລາບຸນອອກພັນສາ ເພື່ອລະນຶກເຖິງຄຸນ ບິດາມານດາ ແລະ ບູຊາພະລາດຕະນະໄຕເຊິ່ງເພິ່ນປ່ອຍໃຫ້ໄຫລໄປຕາມລຳແມ່ນ້ຳ.

ດັ່ງນັ້ນລາວເຮົາຈຶ່ງພາກັນໃສ່ຊື່ເອີ້ນວ່າ ເຮືອໄຟ ແລະຖືເອົາເປັນແບບຢ່າງອັນນັ້ນສືບມາຮອດທຸກມື້ນີ້.





## ເຮືອໄຟ

ໃນໂອກາດບຸນອອກວັດສາ ປະຊາຊົນລາວມັກພາກັນ
ເຮັດເຮືອໄຟ ຫລື ໂຄມໄຟ
ການເຮັດເຮືອໄຟນັ້ນມີຢູ່ສອງຢ່າງຄື:
ເຮືອໄຟນໍ້າສໍາລັບ ໄຫລໄປຕາມລໍາແມ່ນໍ້າ
ເຮືອໄຟໂຄກ ຫລື ບົກ ສໍາລັບຕັ້ງໄວ້ເທິງໂຄກ ຫລື ເທິງ
ບົກບ່ອນບໍ່ມີລໍາແມ່ນໍ້າ.

## ວິທີເຮັດເຮືອໄຟນໍ້າ

ເອົາໄມ້ໃຜ່ບ້ານ ແລະ ຕົ້ນກວ້ຍມາໃຫ້ພໍກັບຄວາມຕ້ອງການ. ເອົາໄມ້ໃຜ່ບ້ານ ສາມລໍາມາລຽນລໍາ. ກະໄລຍະຫ່າງກັນໜຶ່ງແມັດ. ແລ້ວເອົາໄມ້ຊະນິດໜຶ່ງ ເຮັດຂັ້ນຄືກັນກັບຂັ້ນບັນໄດ ມັດຕິດໃສ່ກັນໃຫ້ແໜ້ນ ເອົາຕົ້ນກ້ວຍເຂົ້າຮອງຕາມຫວ່າງຂັ້ນນັ້ນ ຫລື ຕາມຂັ້ນ ເຮັດໃຫ້ຄືກັນກັບຮູບເຮືອທໍາມະດາ. ຕ່າງແຕ່ວ່າເຮືອໄຟເພິ່ນເຮັດໃຫ້ມີຮາວຢູ່ຂ້າງເທິງ ມີຂັ້ນໄດຢູ່ທາງລຸ່ມ. ທ້າຍ ແລະ ຫົວຂອງມັນແອນຂຶ້ນສູງພໍສົມຄວນ ແລ້ວເອົາກາບກ້ວຍຮອງໃສ່ຕາມຮາວນັ້ນເພື່ອຈະໄດ້ເອົາທຽນ, ກະບອງນໍ້າມັນຍາງ, ຂີ້ຊີ ໄປຢາຍໃສ່ຕາມຮາວນັ້ນໃຫ້ສະເຫມີກັນ ສົມມຸດເປັນເຮືອໄຟ. ມາໃນສະໄຫມໃຫມ່ບາງບ່ອນ ເພິ່ນເອົາເຮືອຈັກ ຫລື ກໍາປັ່ນມາເຮັດສົມມຸດເປັນ ເຮືອໄຟ ປະດັບດ້ວຍດອກໄຟຟ້າ.
ເມື່ອຮອດເວລາໄຫລເຮືອໄຟແລ້ວ ພະສົງສາມະເນນກໍພາກັນຕີຄ້ອງຕີກອງປ່າວເຕືອນອອກຕົນຍາດໂຍມຊາວບ້ານໃຫ້ເອົາເຄື່ອງຂອງທີ່ຈະທານນັ້ນໄປໃສ່ຕາມແຕ່ສັດທາຂອງໃຜລາວ ແລະໃນເວລາດຽວກັນນັ້ນກໍພາກັນໄຕ້ໄຟໃສ່ ແລະ ປ່ອຍໃຫ້ເຮືອໄຟໄຫລໄປຕາມລໍາແມ່ນໍ້າ. ໃນຂະນະທີ່ເຮືອໄຟກໍາລັງໄຫລຢູ່ນັ້ນ ສຽງຄ້ອງ ສຽງກອງ ແລະສຽງໄຊໂຍໂຫ່ຮ້ອງ ຂອງປະຊາຊົນທັງຫລາຍທີ່ໄປຮ່ວມໃນການໄຫລເຮືອໄຟນັ້ນ ກໍດັງຂື້ນຢ່າງສະນັ່ນຫວັ່ນໄຫວ. ຄວາມມ່ວນຊື່ນໃນວັນນັ້ນມັນຊ່າງພາໃຫ້ອອນຊອນຫົວອົກຫົວໃຈຫລາຍອີຫລີ.





## ວິທີເຮັດເຮືອໄຟໂຄກ

ວິທີເຮັດກໍ່ຄ້າຍຄືກັນກັບເຮືອໄຟນ້ຳ ຕ່າງແຕ່ວ່າເຮືອໄຟໂຄກ ຫລືບົກນັ້ນ ເວລາໄຕ້ບໍ່ໄດ້ຍ້າຍ ຫລືໄຫລໄປຄືເຮືອໄຟນ້ຳ ມັນຕັ້ງຢູ່ບ່ອນເກົ່າ ພຽງແຕ່ສົມມຸດກັນຊື່ໆ.

ເອົາໄມ້ໄຜ່ບ້ານ ຫລື ໄມ້ສ້າງໄພມາມັດຕິດກັນເປັນຮູບຄືກັນກັບເຮືອໄຟນ້ຳ ແຕ່ບໍ່ໃຫ້ຍ້າຍ ແລະ ບໍ່ໃຫ້ເໜັງຕີງໄດ້. ມັກບ່ອນໃດກໍເຮັດຢູ່ບ່ອນນັ້ນ. ສ່ວນເຄື່ອງຂອງທີ່ຈະເອົາມາໄຕ້ນັ້ນ ກໍຄືກັນກັບເຮືອໄຟນ້ຳ ແຕ່ສ່ວນຫລາຍ ເພິ່ນເອົາ ທຽນໄຂ ມາຕິດໃສ່ແທນສິ່ງອື່ນໆ. ໃນມື້ນັ້ນຢູ່ຕາມວັດຕ່າງໆ ແລະ ຢູ່ຕາມເຮືອນປະຊາຊົນທັງຫລາຍ ກໍພາກັນປະດັບດ້ວຍແສງໄຟ ອັນໄຕ້ດ້ວຍ ທຽນໄຂ ທີ່ມີແສງຮຸ່ງຮືອງ ສະຫວ່າງ ສະໄຫວໄປທົ່ວ. ເປັນຕາອອນຊອນ ແລະ ເບີກບານທົວອົກທົວໃຈຫລາຍອີຫລີ. ອັນນັ້ນ ສະແດງເຖິງຄວາມຮັກຫອມປະເພນີລາວດັ່ງເດີມໄວ້ຢ່າງເຕັມອົກເຕັມໃຈຂອງຊາວລາວທຸກຖ້ວນໜ້າ.

ການໄຫລເຮືອໄຟນີ້ ບາງທ້ອງຖິ່ນເຮັດໃນມື້ທໍ່ເຂົ້າປະດັບດິນ ແລະ ທໍ່ເຂົ້າສະຫລາກກໍມີ.





ເຍົາວະຊົນມາທ່ຽວຊົມໂຄມ ທີ່ເອົາມາເຕົ້າໂຮມທີ່ວັດ
ຊຽງທອງ



ທີ່ເມືອງຫຼວງພະບາງ ເພິ່ນເອົາເຮືອໄຟມາໂຮມກັນຢູ່
ວັດຊຽງທອງ ກ່ອນຈະເອົາມັນໄປໄຫຼລ່ອງແມ່ນ້ຳຂອງ

ຫ້າມຈຳໜ່າຍ

## ພິທີອຸປະສົມບົດ







## ພິທີອຸປະສົມບົດ

ຕາມປະເພນີລາວ ເປັນລູກຜູ້ຊາຍເພິ່ນມັກບວດຕອບບຸນແທນຄຸນບິດາມານດາ. ແຕ່ອາຍຸເຈັດປີເຖິງ 19 ແມ່ນບວດເປັນຈົວ. ເມື່ອອາຍຸ 20 ປີບວດເປັນພະໄດ້. ຜູ້ທີ່ເສຍອົງຄະ ຫລື ມີຄະດີບວດບໍ່ໄດ້.



ຖ້າເປັນຜູ້ຍິງ ຂໍບວດເປັນແມ່ຂາວກໍໄດ້. ພວກແມ່ຊີ ແມ່ຂາວ ເພິ່ນຮັກສາສິນແປດ. ບວດມີສາມຈຳພວກ: ໜຶ່ງ ບວດເປັນເນນ ຮັກສາສິນສິບ, ສອງ ບວດເປັນພິຊຸ ພິກຊຸນີ ຮັກສາສິນສິບ, ສາມ ບວດເປັນພະ ຮັກສາສິນ 227. ບວດເປັນພິຊຸນີ ຮັກສາສິນ 311. ສິກຂະບົດ ບໍ່ໄດ້ບວດເປັນພະ ແຕ່ຮັກສາສິນ 8 ໝາຍເຖິງ ແມ່ຊີ ແມ່ຂາວ. ການກະກຽມມີ ມຸ້ງ ສາດ ໝອນ ເກີບ ຕຽງ ເພິ່ນເອີ້ນວ່າ ເຄື່ອງບໍລິຂານແປດ. ມຸ້ງ ແລະ ຕຽງເປັນຂອງນອກ. ກ່ອນຈະບວດ ຈຳຕ້ອງແຖຫົວ, ຕັດເລັບ, ແຖໜວດ, ແຖເຄົາ, ແຖຄິ້ວ ມີຜ້າຈີວອນຄົບຊຸດ ຈຶ່ງບວດໄດ້. ບວດເວລາໃດກໍໄດ້ ແລ້ວແຕ່ເຫມາະສົມ ແຕ່ຕ້ອງຄອບຄູບາ ໃນສະໄຫມນີ້ ຍັງຕ້ອງແຈ້ງຂໍອະນຸຍາດຈາກການຈັດຕັ້ງຕົ້ນ ເພື່ອຄວາມເປັນລະບຽບຮຽບຮ້ອຍ. ເມື່ອມີນພະມາແລ້ວເພິ່ນກໍບວດໃຫ້ໂລດ. ສ່ວນເວລານັ້ນ ບໍ່ໄດ້ກຳນົດ ມາຍາມໃດກໍໄດ້ ແຕ່ບໍ່ໃຫ້ກາຍ 12 ໂມງກາງຄືນ. ກ່ອນຈະບວດຕອ້ງໄດ້ຮັບອະນຸຍາດຈາກພໍ່ແມ່ ຫລື ຜູ້ປົກຄອງ ແລະ ຕ້ອງ "ຮ້ອງ" ເມຍກ່ອນ (ຫາກມີເມຍ). ໃນພິທີບວດ ຕ້ອງມີຄະນະປະກອບດ້ວຍຄູບາ ຢ່າງໜ້ອຍ 5 ອົງ ເພື່ອເປັນພະຍານ, ມີອຸປະຊາ ໜຶ່ງອົງ, ອາຈານສວດ ສອງອົງ, ຫົວໜ້າຄະນະສາມອົງ. ເລື້ອງການສິກນັ້ນເອົາແຕ່ສັດທາຢາກສິກຍາມໃດກໍໄດ້, ບໍ່ຫ້າມ. ກ່ອນຈະສິກ ຕ້ອງນິມົນພະມາເປັນພະຍານປະມານ ສາມສີ່ອົງ ມາສະແດງອາບັດ ຖ້າວ່າເຮົາສິກໄປ ມັນຈະເປັນກຳ ແລ້ວປົງມີ ມີແຕ່ຮັກສາສິນຫ້າ ໃຫ້ຮັກສາປະເພນີ ໃຫ້ລ້າງຖານ, ລ້າງກຸຕິ, ວິຫານ, ຂັ້ນໃດ ແປວ່າ ລົດບາບຫລຸດໂທດ.



ຍາດຕິພີ່ນ້ອງຂອງຜູ້ຈະບວດ ກະກຽມພາບາສີເພື່ອ
ທຳພິທີສູ່ຂວັນໃຫ້ນາກ.



ຈົວສາມອົງນີ້ ຫລັງຈາກພິທີບາສີແລ້ວ ຈະໄດ້ບວດ
ເປັນພະ



ພະຈະບວດໃໝ່ ອອກມາຢືນຂ້າງນອກຫໍດຖະບາດ
ປະມານ 12 ສອກ ແລ້ວພະກຳມະວາຈານຈະອອກ
ມາຖາມອັນຕະຣາຍິກະທຳ: ເຈົ້າບໍ່ເປັນໂຣກຕິດຕໍ່ບໍ່
ແລະ ໄດ້ຮັບອະນຸຍາດຈາກພໍ່ ແລະການຈັດຕັ້ງແລ້ວບໍ່.



ພະກຳມະວາຈາເອີ້ນ ພະນະວະກະຜູ້ຈະບວດໃໝ່
ເຂົ້າໃນກາງສົງ ແລະ ຖາມອັນຕະລາຍິກະທຳຕົ່ມ
ແລ້ວສູດສົມມຸດກາງສົງໃຫ້ເປັນພະພິກຂຸໃໝ່.



ພະອຸປະຊາ ໃຫ້ໂອວາດແກ່ພະພິກຂຸຜູ້ບວດໃຫມ່



ຄະນະສົງຮັບເຄື່ອງສັງຄະທານ ຈາກເຈົ້າສັດທາຜູ້
ຕັ້ງກອງບວດແລ້ວໃຫ້ພອນ.



ພະບວດໃຫມ່ຖ່າຍຮູບຮ່ວມຍາດຕິພີ່ນ້ອງ

# ຄວາມເປັນມາຂອງໜັງສືໃບລານ

ສ.ປ.ປ.ລາວ ດິນແດນແຫ່ງອານາຈັກລ້ານຊ້າງ ປະກອບດ້ວຍມໍລະດົກວັດທະນະທຳອັນຫລາກຫລາຍ ແລະ ລ້ຳຄ່າ ຄູນບ້ານຄູນເມືອງ. ໃນນີ້ ວັດທະນະທຳດ້ານວັນນະຄະດີລາວ ນັບເປັນໜຶ່ງໃນຄວາມຫລາກຫລາຍ ທີ່ຍັງຄົງຕົວຢູ່ໃນຮູບແບບໜັງສືຜູກໃບລານທີ່ມີອາຍຸເກົ່າແກ່ຄືນຫລັງ ກ່ອນສັດຕະວັດທີ 15-16 (ຄ.ສ). ປັດຈຸບັນທົ່ວປະເທດລາວ ມີວັດວາອາລາມກວ່າ 1.700 ແຫ່ງ ໃນນັ້ນສ່ວນຫລວງຫລາຍກໍ່ຍັງມີການເກັບຮັກສາ ແລະ ຊົມໃຊ້ໜັງສືໃບລານໂດຍທົ່ວໆໄປ ຕາມປະເພນີຂອງເຂດຊຸມຊົນຊາວພຸດທະບໍລິສັດ ທີ່ຍັງເຄົາລົບໃນພະທຳຄຳສອນ ຂອງອົງພະສຳມາສຳພຸດທະເຈົ້າ. ແຕ່ໃນຄວາມເປັນຈິງແລ້ວ ໜັງສືໃບລານບໍ່ໄດ້ບັນຈຸສະເພາະເອກະສານທາງສາສະໜາເທົ່ານັ້ນ ສ່ວນໜຶ່ງຈະເປັນປະເພດປະຫວັດສາດ, ກົດໝາຍບູຮານ, ຮີດຄອງປະເພນີ, ໂຫລາສາດ, ຕຳລາຢາພື້ນເມືອງ, ກາບກອນ, ໂຄງສັນ, ນິທານພື້ນເມືອງ ແລະ ອື່ນໆ. ເນື້ອໃນບາງປະເພດກໍ່ຂຽນໄວ້ໃນພັບສາ ອັນເປັນຜະລິດຕະພັນພື້ນບ້ານ ແລະ ມີວິທີອາຍຸສັ້ນກ່ວາໃບລານ ຊຶ່ງຈະສາມາດຄົງຕົວຢູ່ຮອດ 1.000 ປີ ຖ້າປົກປັກຮັກສາຢ່າງຖືກວິທີ. ແຕ່ຜ່ານກາລະເວລາອັນຍາວນານໜັງສືຈຳນວນຫລາຍ ໄດ້ຖືກທຳລາຍຈາກທຳມະຊາດ, ປວກກັດ, ໜູກິນ ຫລື ຜຸເປື່ອຍໄປຕາມສະພາບ.
ເອກະສານດັ່ງກ່າວ ສ່ວນຫລວງຫລາຍຍັງບໍ່ທັນໄດ້ນຳອອກເຜີຍແຜ່ສູ່ໂລກພາຍນອກຢ່າງກ້ວາງຂວາງ ແລະ ຄອງຄອຍການຄົ້ນຄ້ວາສຶກສາຂອງວົງການນັກປາດອາຈານ ແລະ ນັກວິຊາການທັງພາຍໃນ ແລະ ຕ່າງປະເທດ.

ນອກຈາກຂຽນເປັນພາສາລາວ (ຕົວໜັງສືລາວ ແລະ ຕົວທັມ) ແລ້ວຍັງມີໜັງສືໃບລານ ທີ່ຂຽນເປັນພາສາປາລີ (ໂດຍໃຊ້ອັກສອນທັມ) ອັນເປັນພາສາສັກສິດໃນພຸດທະສາສະໜາເຖລະວາດ. ໃນປີ 1995 ໂຄງການປົກປັກຮັກສາໃບລານ ແລະ ພັບສາ ທີ່ຂຶ້ນກັບກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ໄດ້ສຳຫລວດ ແລະ ພົບເອກະສານທີ່ເກົ່າແກ່ ກ່ອນສະຕະວັດທີ 16 ຊຶ່ງອາດເປັນໜັງສືເກົ່າແກ່ທີ່ສຸດສະບັບໜຶ່ງໃນອາຊີອາຄະເນ ໃນຈຳນວນໜັງສືປະເພດນີ້.

### ເນື້ອໃນຂອງໂຄງການປົກປັກຮັກສາໜັງສືໃບລານ ແລະ ພັບສາ

ໂຄງການນີ້ ເປັນໂຄງການຂອງກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ໄດ້ຮັບການສະໜັບສະໜູນ ຈາກມູນນິທິໂຕໂຍຕາ ຂອງຍີ່ປຸ່ນ ແລະ ລັດຖະບານ ສາທາລະນະລັດ ສະຫະພັນເຢຍລະມັນ. ການດຳເນີນໂຄງການເລີ່ມຈາກວຽກງານປົກປັກຮັກສາດ້ານວັດຖຸພາບ ໜັງສືໃບລານຢູ່ຕາມວັດຕ່າງໆ, ຫໍສະມຸດ ຫລື ຂອງສ່ວນບຸກຄົນ ທຸກເຂດແຂວງໃນຂອບເຂດທົ່ວປະເທດ ໂດຍວາງຄາດໝາຍລະຍະປະຕິບັດໂຄງການໄວ້ປະມານ 10 ປີ. ໃນຈຳນວນວັດວາອາລາມທັງໝົດກວ່າ 1.700 ແຫ່ງ ຄາດວ່າ ຈະສາມາດຄັດເລືອກເປັນບ່ອນລົງສຳຫລວດໄດ້ 300-600 ວັດ ທີ່ມີໜັງສືຜູກຫລາຍພໍສົມຄວນ ຄືແຕ່ 400 ຜູກຂຶ້ນໄປ (ຜູກໜຶ່ງມີປະມານ 16-32 ໜ້າລານ). ທີມງານສຳຫລວດປະກອບດ້ວຍນັກວິຊາການ ແລະ ຜູ້ຊ່ວຍວຽກ 4 ຄົນ ລົງໄປແຕ່ລະວັດຮ່ວມກັບຊາວບ້ານ ແລະ ພະສົງ ຜູ້ເປັນເຈົ້າຂອງໜັງສືໃບລານຊ່ວຍກັນເກັບກຳ ແລະ ທຳຄວາມສະອາດໜັງສືໃບລານ ໂດຍການປັດຝຸ່ນອອກ ແລະ ເຊັດໜ້າໃບລານດ້ວຍເຫລົ້າເກົ້າສິບ ອັນຈະຊ່ອຍໃຫ້ໃບລານສະອາດ ກຳຈັດເຊື້ອເຫັດ ແລະ ເຮັດໃຫ້ຕົວໜັງສືແຈ້ງຄືນ. ຈາກນັ້ນ ໜ່ວຍສຳຫລວດກໍຕັ້ງໜ້າຄົ້ນຄ້ວາເກັບກຳຂໍ້ມູນທີ່ຕ້ອງການ ລົງໃນໃບສຳຫລວດ ຈຳນວນ 14 ຂໍ້ມູນ ເພື່ອສົ່ງໄປເຂົ້າໂປູແກຼມ ຄອມພິວເຕີຢ່າງເປັນລະບົບ. ການສຳຫລວດຍັງແມ່ນການດູແລດ້ານການເກັບມ້ຽນໃສ່ຕູ້ ຫີບທຳ ແລະ ຈັດວາງເປັນໝວດໝູ່ ເພື່ອສະດວກໃນການຊົມໃຊ້ຕໍ່ໄປອີກດ້ວຍ. ຢູ່ແຕ່ລະຄຸ້ມບ້ານທີ່ທີມງານລົງສຳຫລວດ ຈະມີການອົບຮົມຄວາມຮູ້ພື້ນຖານ ກ່ຽວກັບການອະນາໄມ ແລະ ປົກປັກຮັກສາໃບລານ ພ້ອມທັງແລກປ່ຽນຄວາມຄິດເຫັນ ຄວາມຮູ້ພູມປັນຍາຂອງຊາວບ້ານ ຜູ້ໄດ້ອ່ານ, ໄດ້ຮຽນຈາກໜັງສືໃບລານມາແລ້ວ ເພື່ອຢັ້ງຢືນວ່າ ເນື້ອໃນຂອງໜັງສືເຫລົ່ານີ້ ສ່ວນຫລາຍຍັງສາມາດຮັບໃຊ້ໃຫ້ແກ່ສັງຄົມປັດຈຸບັນ ຮອດເຊັ່ນລູກເຊັ່ນຫລານ ແລະ ເປີດໂອກາດໃຫ້ພະສົງ, ຊາວບ້ານ, ຕະຫລອດເຖິງຜູ້ຕາງໜ້າແນວໂຮມ ແລະ ອົງການຈັດຕັ້ງມະຫາຊົນຢູ່ບ້ານຕ່າງໆ ໄດ້ສະແດງທັດສະນະຂອງຕົນຢ່າງກວ້າງຂວາງ ທັງໄດ້ຮັບຮູ້ຄຸນຄ່າມໍລະດົກວັດທະນະທຳຂອງຕົນ ແລະ ການທີ່ຈະຕ້ອງສືບທອດການປົກປັກຮັກສາຕໍ່ໄປຢ່າງໃດ.

### ວັດຖຸປະສົງຫລັກຂອງໂຄງການມີຄື:

1. ປົກປັກຮັກສາໜັງສືໃບລານ ແລະ ພັບສາ ທີ່ມີຢູ່ຕາມວັດ, ນຳບຸກຄົນ ແລະ ຫໍສະໝຸດຕ່າງໆ ໃນທົ່ວປະເທດ ດ້ວຍເຕັກນິກວິຊາການອັນເໝາະສົມ ກ່ອນທີ່ເອກະສານເຫລົ່ານັ້ນຈະຖືກຊຳລຸດເສຍຫາຍໜັກເຂົ້າໄປອີກ.
2. ສ້າງສະຕິຕື່ນຕົວ ໃນໝູ່ມະຫາຊົນ ໃຫ້ຮູ້ຄຸນຄ່າຂອງໜັງສືຜູກໃບລານ ພ້ອມທັງສົ່ງເສີມໃຫ້ມີການປະກອບສ່ວນໂດຍກົງຈາກມວນຊົນ ໃນການປົກປັກຮັກສາໜັງສືດັ່ງກ່າວຢູ່ໃນທ້ອງຖິ່ນຂອງຂະເຈົ້າເອງ. ຈັດໃຫ້ມີຕາໜ່າງປົກປັກຮັກສາຢູ່ກັບທີ່ ໂດຍແມ່ນພະສົງ ແລະ ຊາວບ້ານ ສືບຕໍ່ປົກປັກຮັກສາມໍລະດົກວັດທະນະທຳ ວັນນະຄະດີຂອງຕົນ ທັງນຳໃຊ້ໃຫ້ເປັນປະໂຫຍດຕະຫລອດກາລະນານ.
3. ສ້າງລະບົບຂໍ້ມູນ ເພື່ອເອື້ອອຳນວຍໃຫ້ວົງການສຶກສາຄົ້ນຄວ້າ ສາມາດນຳໃຊ້ໜັງສືໃບລານໃຫ້ກວ້າງຂວາງ ທັງເປັນການພັດທະນາດ້ານການຮຽນການສອນ ແລະ ຊັບພະຍາກອນມະນຸດເພື່ອນຳໃຊ້ໜັງສືໃບລານ ດ້ານການຄົ້ນຄ້ວາວັນນະຄະດີລາວບູຮານ ໃນລະດັບສູງຂຶ້ນໄປເລື້ອຍໆ ເຊັ່ນ ໃນວົງການສຶກສາຂອງພຸດທະສາສະນະສຳພັນລາວ (ວິທະຍາໄລສົງ),ມະຫາວິທະຍາໄລແຫ່ງຊາດ (ສ້າງຕັ້ງປີ 1996) ແລະ ການບໍລິການປະຈຳວັນທີ່ຫໍສະໝຸດແຫ່ງຊາດ.

24/VII
ຫ້າມຈຳໜ່າຍ

# ໜັງສືໃບລານ





ປະຊາຊົນໃນແຕ່ລະບ້ານຄົບໜ້າຄົບຕາ ພ້ອມທັງ
ພະສົງ ແລະ ສາສະນິກະຊົນ ຮ່ວມມືກັນອະນາໄມ
ໜັງສືຜູກໃບລານ ຊຶ່ງເປັນມູນມໍລະດົກອັນລ້ຳຄ່າ
ຂອງຊາດ.
ໜັງສືຜູກໃບລານ ຊຶ່ງເປັນກຳມະສິດຂອງບ້ານ ຈະ
ໄດ້ຖືກເກັບຮັກສາໄວ້ຢ່າງປອດໄພຢູ່ທີ່ວັດ.



ການອະນາໄມໃບລານ ໂດຍໃຊ້ເຫລົ້າ 90 ປະລິມຍາ
ເຄມີແລ້ວ, ພະນັກງານສຳຫລວດກໍຈັດຫມວດຫມູ່
ແລະ ຂຶ້ນບັນຊີຂໍ້ມູນ ເປັນຕົ້ນຊື່ເລື່ອງຈຳນວນຜູກ, ປີ
ຈານ ແລະ ສັດທາ ແລ້ວກໍທ້ອນເຂົ້າກັນ (ໄມ້ແນບ)
ແລະ ຊຽນປີ້ຫ້ອຍໃສ່ເປັນມັດ ເພື່ອສະດວກໃນການ
ຄົ້ນຄ້ວາເວລາເກັບມ້ຽນໄວ້ຕູ້ຄຳພີຂອງວັດຄືນ.



ພິທີຄາລະວະທຳ: ພາຍຫລັງສຳເລັດການຂຶ້ນທະບຽນໜັງສືຜູກໃບລານ ເພື່ອເປັນການສົມໂພດ. ພິທີຄາລະວະ ແມ່ນເຕົ້າໂຮມເຖົ້າແກ່ ພະສົງສຳມະເນນມາທີ່ສາລາໂຮງທຳ ຫລື ໃນພຸດທະສີມາ (ສິມ) ມີດອກໄມ້ທູບທຽນຂັນຫ້າ ຂັນແປດ ແລະ ບາງວັດກໍມີຕົ້ນກາລະພຶກ.



ປະຊາຊົນໄວ້ພະຮັບສິນ ແລະ ກ່າວຄຳຄາລະວະພະພຸດ, ພະທຳ ແລະ ພະສົງ ເພື່ອຂໍຂະມາໂທດ ທີ່ໄດ້ລ່ວງເກີນຈັບບາຍ, ຂ້າມກາຍພະທຳຄຳສອນ ເປັນການຂໍພອນໃຫ້ທຸກໆຄົນມີສຸຂະພາບແຂງແຮງ ໄດ້ຮັບບຸນກຸສົນທີ່ໄດ້ພ້ອມກັນປົວລະບັດຜັດສີໜັງສືຜູກໃບລານໃຫ້ຈີບງາມ ແລະ ຄົງທົນຖາວອນໄວ້ຊົ່ວລູກຊົ່ວຫລານສືບຕໍ່ໄປ.



ຫລັງຈາກຫນັງສືຜູກໃບລານ ໄດ້ຖືກອະນາໄມ, ເຂົ້າມັດເຂົ້າຜູກຄືນ ແລະ ຂຶ້ນບັນຊີຮຽບຮ້ອຍແລ້ວ ເພິ່ນຈະມີພິທີມອບໃບລານດັ່ງກ່າວຄືນໃຫ້ວັດ. ຫຼັງຈາກນັ້ນ ຈະມີພິທີວຽນທຽນ ແລະ ແຫ່ຫນັງສືຜູກອ້ອມພະທາດ ຫລື ສິມຂອງວັດ.



ພະສົງສຳມະເນນ ແລະ ປະຊາຊົນ ນຳເອົາຫນັງສືຜູກ
ທີ່ໄດ້ຫໍ່ຮຽບຮ້ອຍ ແລະ ຕິດປ້າຍເຂົ້າໄປເກັບມ້ຽນຢູ່ໃນ
ຕູ້ເອກະສານ ຫລື ຫີບຄຳພີຂອງວັດ.



ຄູບາອາຈານ ສາສະນິກະຊົນ ແລະ ນັກຄົ້ນຄ້ວາ
ຈະສາມາດເອົາໜັງສືຜູກໃບລານອອກມານຳໃຊ້ໃນ
ອານາຄົດໄດ້ຢ່າງສະດວກສະບາຍກ່ວາ.



# "ຂອບໃຈທີ່ຫລຽວເບິ່ງ"

## ປຶ້ມເພື່ອນັກຮຽນນັກສຶກສາລາວ
## ພາບໂດຍ: ຮັນສ ເກອອກ ເບີເກີ
## ເນື້ອໃນໂດຍ: ສົມສະຫນຸກ ມີໄຊ

ຮູບພາບຕ່າງໆຢູ່ໃນປຶ້ມຫົວນີ້ ແມ່ນໄດ້ຖ່າຍຢູ່ໃນນະຄອນຫລວງພະບາງ ແລະ ບ້ານອ້ອມແອ້ມ. ນີ້ເປັນຜົນງານຂອງໂຄງການຖ່າຍພາບອັນກວ້າງຂວາງ ກ່ຽວກັບບຸນປະເພນີ ແລະ ພິທີຕ່າງໆຂອງຫລວງພະບາງ. ນັກຖ່າຍພາບ ເຢຍລະມັນ ຮັນສເກອອກ ເບີເກີ ໄດ້ຖ່າຍພາບດັ່ງກ່າວນີ້ ໃນລະຫວ່າງປີ 1994 ແລະ 1997. ໂຄງການນີ້ ຄົງຈະບໍ່ກາຍເປັນຈິງ ຖ້າຫາກວ່າ ເພື່ອນໆລາວຫລາຍຄົນບໍ່ໄດ້ສະຫລະເວລາເພື່ອແນະນຳໃຫ້ແກ່ນັກຖ່າຍພາບ ແລະ ໃຫ້ຄຳຄິດຄຳເຫັນກ່ຽວກັບເນື້ອໃນຂອງຮູບພາບ ແລະ ຄວາມຫມາຍດ້ານສິລະປະ. ໂຄງການນີ້ ເປັນໂຄງການລວມຫມູ່ບົນພື້ນຖານຄວາມເຄົາລົບນັບຖືຂະນົບທຳນຽມປະເພນີຂອງລາວ ແລະ ຄວາມມຸ່ງມາດປາຖະຫນາ ທີ່ຢາກເຜີຍແຜ່ເນື້ອໃນ ແລະ ຄວາມຫມາຍຂອງປະເພນີດັ່ງກ່າວໃຫ້ຜູ້ທີ່ຍັງບໍ່ທັນຮູ້.

ນອກຈາກວຽກງານຂອງນັກຖ່າຍພາບແລ້ວ ຍັງມີຜົນງານຂອງຜູ້ຂຽນອີກດ້ວຍ. ສະເພາະປຶ້ມຫົວນີ້ ທ່ານ ສົມສະຫນຸກ ມີໄຊ ຊຶ່ງເປັນນັກຂ່າວ ທັງເປັນຫົວຫນ້າບັນນາທິການຂອງຫນັງສືພິມວຽງຈັນທາຍ ທີ່ໄດ້ມີສາຍພົວພັນພິເສດອັນແຫນ້ນແຟ້ນກັບນະຄອນຫລວງພະບາງມາ ແຕ່ດົນນານ ນັ້ນໄດ້ເລົ່ານິທານຈຳນວນຫນຶ່ງ, ທີ່ຄັດມາຈາກມູນມໍລະດົກອັນລ້ຳຄ່າຂອງລາວເຮົາ ແລະ ໄດ້ອະທິບາຍເນື້ອໃນຂອງແຕ່ລະພາບ.

ຫວັງວ່າ ຜົນງານລວມຂອງທ່ານທັງສອງນີ້ ຈະປະກອບສ່ວນເຂົ້າໃນການເຮັດໃຫ້ຜູ້ອ່ານຮູ້ກ່ຽວກັບວັດທະນະທຳຂອງລາວ. ວັດທະນະທຳນີ້ ມີເອກະລັກຂອງຕົນ ແລະ ທັງເປັນມູນມໍລະດົກອັນລ້ຳຄ່າຂອງປະເທດຊາດ. ແນ່ນອນແລ້ວ ປຶ້ມຫົວນີ້ ວ່າດ້ວຍປະເພນີ ແລະ ພິທີຂອງຫລວງພະບາງເປັນພຽງແຕ່ຕົວຢ່າງອັນຫນຶ່ງ ຂອງຄວາມອຸດົມຮັ່ງມີຂອງວັດທະນະທຳທີ່ມີຫລາຍຮູບຫລາຍແບບຂອງລາວ. ເຂດອື່ນໆຂອງລາວ ແລະ ຊົນເຜົ່າອື່ນໆຢູ່ໃນປະເທດນີ້ ຍັງມີມູນມໍລະດົກອັນລ້ຳຄ່າຢ່າງຫລວງຫລາຍອີກ. ປຶ້ມຫົວນ້ອຍໆນີ້ ໄດ້ພິມເພື່ອນັກຮຽນລາວ ເພື່ອພາໃຫ້ນັກຮຽນສົນໃຈກ່ຽວກັບປະເພນີ ແລະ ພິທີທີ່ເຂົາເຈົ້າເຄີຍໄປຮ່ວມພ້ອມກັບຄອບຄົວ ແລະ ເພື່ອນມິດ. ມີແຕ່ຜ່ານການໄປຮ່ວມບຸນ, ພິທີ ແລະ ປະເພນີຕ່າງໆນີ້ ພວກເຮົາຈຶ່ງຈະເຂົ້າໃຈການເປັນມາຂອງພວກເຮົາເອງ.

ປຶ້ມຫົວນີ້ ແມ່ນຜົນງານຂອງການຮ່ວມມື ລະຫວ່າງລັດຖະບານລາວ-ລັດຖະບານຂອງເຢຍລະມັນ ແນໃສ່ປົກປັກຮັກສາມູນມໍລະດົກຂອງລາວ. ມັນໄປຄຽງຄູ່ກັບການຊ່ວຍເຫລືອຂອງອຸຍແນສໂກ ຊຶ່ງເປັນອົງການວັດທະນະທຳຂອງສະຫະປະຊາຊາດຕໍ່ ສປປ.ລາວ ໂດຍສະເພາະແມ່ນຕໍ່ນະຄອນຫລວງພະບາງ. ຜູ້ຖ່າຍພາບ ແລະ ຜູ້ຂຽນຂໍສະແດງຄວາມຮູ້ບຸນຄຸນອັນເລິກເຊິ່ງຕໍ່ທ່ານ ບົວບານ ວໍລະຂຸນ ຮອງລັດຖະມົນຕີກະຊວງຖະແຫລງຂ່າວ ແລະ ວັດທະນະທຳຂອງ ສປປ.ລາວ.

ພວກເຮົາ ຍັງຂໍຮູ້ບຸນຄຸນຕໍ່ ທ່ານ ອຸນຣິກເດູເຊັນ ເອກອັກຄະລັດຖະທູດ ແຫ່ງສາທາລະນະລັດສະຫະພັນເຢຍລະມັນ ທີ່ໄດ້ສະຫນັບສະຫນູນໂຄງການນີ້, ຕໍ່ພະອາຈານອ່ອນແກ້ວ ຊິດທິວົງ ອະດີດເຈົ້າອະທິການວັດປາກຄານ ຫລວງພະບາງ ແລະ ຕໍ່ທ່ານອື່ນໆທີ່ໄດ້ໃຫ້ຄຳແນະນຳອັນລ້ຳຄ່າ. ພວກເຮົາ ຂໍສະແດງຄວາມຂອບອົກຂອບໃຈພິເສດຕໍ່ປະຊາຊົນຊາວນະຄອນຫລວງພະບາງ ທີ່ໄດ້ໃຫ້ການສະຫນັບສະຫນູນດ້ວຍຄວາມຮັກແພງ ແລະ ອົບອຸ່ນແກ່ພວກເຮົາໃນຕະຫລອດໄລຍະເວລາ ທີ່ໄດ້ໄປຖ່າຍພາບ ແລະ ເກັບກຳສາລະຂໍ້ມູນຢູ່ນະທີ່ນັ້ນ.

## “ຂອບໃຈທີ່ຫລຽວເບິ່ງ”

### ປື້ມເພື່ອນັກຮຽນລາວ.


* ພິມຕາມການຕົກລົງລະຫວ່າງລັດຖະບານ ສ ປ ປ ລາວ ແລະ ລັດຖະບານ ສ.ສ.ເຢຍລະມັນ ດ້ວຍທຶນຊ່ວຍເຫລືອ ຈາກກົມວັດທະນະທຳ ຂອງກະຊວງການຕ່າງປະເທດ ສ.ສ ເຢຍລະມັນ.
* ອອກແບບໂດຍ: ນາງ ມະໄລທອງ ພະຍານຸວົງ
* ປື້ມຫົວນີ້ ມອບໃຫ້ໂຮງຮຽນຕ່າງໆ, ຫ້າມຂາຍ


* ສະຫງວນລິຂະສິດ 1998


* ວຽງຈັນ, ສ.ປ.ປ.ລາວ 1998
* ຕາມ ທບ 44/ພທປ 23/11/98
* ພິມໂດຍໂຮງພິມກະຊວງສຶກສາ



ຫ້າມຈຳໜ່າຍ

## ຮັນສ ເກອອກ ເບີເກີ

ທ່ານ ຮັນສເກອອກເບີເກີ ເປັນຜູ້ຖ່າຍພາບຂອງປຶ້ມຫົວນີ້. ທ່ານຍັງເປັນນັກຂຽນປຶ້ມ ແລະ ຂຽນເລື່ອງລະຄອນ. ທ່ານມີສັນຊາດເຢຍລະມັນ ແຕ່ວ່າ ອາໃສຢູ່ປະເທດອີຕາລີມາໄດ້ 20 ປີແລ້ວ. ທ່ານໄດ້ສ້າງຕັ້ງສູນທີ່ນັກສິລະປິນ ແລະ ນັກຄົ້ນຄ້ວາຈາກທົ່ວໂລກ ໄດ້ໄປພົບກັນ ແລະ ແລກປ່ຽນທາງດ້ານສິລະປະວັນນະຄະດີ, ດ້ານດົນຕີ, ວັດຖຸບູຮານ ແລະ ດ້ານການຄົ້ນຄ້ວາ ພົດພັນຕ່າງໆ. ໃນ 10 ປີຜ່ານມາ ທ່ານ ຮັນສເກອອກເບີເກີ ໄດ້ມາຢ້ຽມຢາມອາຊີອາຄະເນຢ່າງລຽນຕິດ ທ່ານໄດ້ຖ່າຍຮູບທີ່ກຳປູເຈຍ, ໄທ ແລະ ຫວຽດນາມ. ແຕ່ໂຄງການ ການຖ່າຍຮູບອັນກ້ວາງຂວາງທີ່ສຸດຂອງເພິ່ນ ແມ່ນຢູ່ລາວ ໂດຍສະເພາະ ແມ່ນພາບກ່ຽວກັບພິທີຕ່າງໆ ແລະ ຊີວິດໃນວັດວາອາລາມຢູ່ຫລວງພະບາງ. ທ່ານໄດ້ເລີ່ມຖ່າຍພາຍໃນປີ 1994 ແລະ ກໍ່ຍັງຖ່າຍມາຢູ່ໃນເວລາປຶ້ມຫົວນີ້ຖືກພິມອອກ. ພາບກ່ຽວກັບຫລວງພະບາງໄດ້ນຳໄປວາງສະແດງ ທີ່ວັດສີສະເກດວຽງຈັນ ໃນເດືອນ ພະຈິກ ປີ 1997 ພາບດັ່ງກ່າວຈະໄດ້ນຳໄປວາງສະແດງຢ່າງຖາວອນ ທີ່ຫລວງພະບາງໃນທ້າຍປີ 1998.

## ສົມສະຫນຸກ ມີໄຊ

ທ່ານ ສົມສະຫນຸກ ມີໄຊ ຊຶ່ງເປັນຜູ້ຂຽນ ແລະ ຮຽບຮຽງເນື້ອໃນປຶ້ມຫົວນີ້ ໄດ້ເຄື່ອນໄຫວໃນວົງການຂ່າວມາ 20 ກ່ວາປີແລ້ວ ທ່ານໄດ້ເປັນນັກຂ່າວ ທີ່ວິທະຍຸກະຈາຍສຽງແຫ່ງຊາດ ພາກພາສາຝລັ່ງ ແລະ ອັງກິດ ຕໍ່ມາກໍ່ໄດ້ເປັນຫົວຫນ້າພະແນກພາສາຕ່າງປະເທດ ຂອງກົມວິທະຍຸກະຈາຍສຽງແຫ່ງຊາດລາວ.

ໃນປີ 1984 ທ່ານໄດ້ຖືກແຕ່ງຕັ້ງໃຫ້ເປັນຮອງຫົວຫນ້າອຳນວຍການວິທະຍຸກະຈາຍສຽງ ແລະ ໂທລະພາບແຫ່ງຊາດລາວ.

ໃນປີ 1994 ທ່ານໄດ້ຖືກມອບຫມາຍໃຫ້ເຮັດຫນັງສືພິມ ພາສາອັງກິດ Vientiane Times ໂດຍໄດ້ຖືກແຕ່ງຕັ້ງໃຫ້ເປັນຫົວຫນ້າອຳນວຍການ ແລະ ຫົວຫນ້າບັນນາທິການ.

ທ່ານໄດ້ຂຽນບົດຢ່າງຫລວງຫລາຍ ກ່ຽວກັບວັດທະນະທຳປະເພນີ ແລະ ສິລະປະວັນນະຄະດີລາວ, ເພື່ອກະຈາຍອອກທາງວິທະຍຸ ແລະ ລົງຫນັງສືພິມ.

ທ່ານສົມສະຫນຸກ ມີໄຊ ຍັງເປັນຮອງປະທານສະມາຄົມນັກຂ່າວແຫ່ງ ສປປ ລາວ.

# “ຂອບໃຈທີ່ຫລຽວເບິ່ງ”

* ປຶ້ມເພື່ອນັກຮຽນລາວ
* ພາບໂດຍ: ຮັນສເກອອກ ເບີເກີ
* ເນື້ອໃນໂດຍ: ສົມສະຫນຸກ ມີໄຊ
* ຄຳນຳໂດຍ: ພະນະທ່ານ ບົວບານ ວໍລະຂຸນ ຮອງລັດຖະມົນຕີກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ແຫ່ງ ສ ປ ປ ລາວ ແລະ
ພະນະທ່ານ ອຸ່ນຣິກເດຣເຊີນ ເອກອັກຄະລັດຖະທູດ ສາທາລະນະລັດ ສະຫະພັນເຢຍລະມັນ ປະຈຳ ສ ປ ປ ລາວ.
* ປຶ້ມຫົວນີ້ ນອນຢູ່ໃນໂຄງການແຫ່ງການຮ່ວມມືລາວ-ເຢຍລະມັນ ຜະລິດໂດຍການສະຫນັບສະຫນູນທຶນ ຂອງກົມວັດທະນະທຳ ແຫ່ງກະຊວງການຕ່າງປະເທດເຢຍລະມັນ.

## Danke fürs Herschauen

**Ein Buch für die Schüler von Laos**
**Photographien: Hans Georg Berger**
**Text: Somsanouk Mixay**

**Zweite Auflage, Oktober 2000**
**Dieses Buch für die laotischen Schulen wurde mit Mitteln der Kulturabteilung des Auswärtigen Amtes der Bundesrepublik Deutschland im Rahmen eines deutsch-laotischen Kulturprojekts in Laos hergestellt.**
**Es ist urheberrechtlich geschützt.**
**Das Buch ist nicht zum Verkauf bestimmt.**

## Thank you for looking

**A book for students in Laos**
**Photographs: Hans Georg Berger**
**Text: Somsanouk Mixay**

**Second edition, October 2000**
**This book for the schools in Laos has been produced with funding by the Cultural Department of the Ministry of Foreign Affairs of the Federal Republic of Germany. It is part of a lao-german cooperation project.**
**This book's copyright is protected by law.**
**It is not for sale.**

*For general information on Hans Georg Berger`s documentation of the ceremonies of Laos: www.hansgeorgberger.de*

*Photolitho & Printed by Education Printing Enterprise, Vientiane, Lao PDR*
*October 2000*

